ກະຊວງ ກະສິກຳ ແລະ ປ່າໄມ້
ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້

# ບົດລາຍງານການຄົ້ນຄ້ວາ

## ການສຶກສາທ່າແຮງດ້ານການຜະລິດ ແລະ ການຕະຫຼາດຂອງກະລຳປີ ຂອງບ້ານທີ່ຢູ່ໃນ ແລະ ນອກໂຄງການຂອງເມືອງໂພນໄຊ ແຂວງ ຫລວງພະບາງ



ທ. ການຈະນາ ພິມມະເສນ

ໂຄງການຍ່ອຍຄົ້ນຄ້ວາ ເສດຖະກິດ-ສັງຄົມ

---

ໂຄງການຄົ້ນຄ້ວາ ກະສິກຳ ແລະ ປ່າໄມ້ ເຂດພູດອຍຮ່ວມມື ລາວ-ຊູແອດ
ເມສາ, 2007

## ສາລະບານ


ຄຳຂອບໃຈ ……………………………………………………………………………I

ບົດຄັດຫຍໍ້ ……………………………………………………………………………II

ຕາຕະລາງ ……………………………………………………………………………III

ຮູບພາບ ……………………………………………………………………………IV

I. ພາກສະເໜີ .......................................................................................... 1

ຄວາມເປັນມາ ........................................................................................ 1

ຈຸດປະສົງຂອງການສຶກສາ .......................................................................... 2

ວິທີການ ................................................................................................. 2

II. ສະພາບທົ່ວໄປຂອງເຂດສຶກສາ ..................................................................... 3

ຂອບເຂດການສຶກສາ ………………………………………………………………… 3

ເງື່ອນໄຂທາງດ້ານທຳມະຊາດ ........................................................................ 4

ເງື່ອນໄຂທາງດ້ານເສດຖະກິດ-ສັງຄົມ ........................................................... 5

III. ລະບົບການຜະລິດກະລ່ຳປີ ..................................................... .................... 7

ການຜະລິດ .............................................................................................. 7

ລະດູການ ແລະ ເຕັກນິກການຜະລິດ ............................................................ 7

ເນື້ອທີ່ຂອງການຜະລິດ ............................................................................... 12

ແຮງງານໃນການຜະລິດ .............................................................................. 12

ຕົ້ນທຶນ ແລະ ລາຍຮັບ .................................................................................. 13

IV. ສະພາບທົ່ວໄປຂອງການຕະຫຼາດຢູ່ເມືອງໂພນໄຊ ............................................... 14

ຂະບວນການທາງດ້ານການຕະຫຼາດຢູ່ໃນເຂດໂຄງການ ແລະ ນອກໂຄງການ .......... 15

ລາຄາຂອງກະລ່ຳປີໃນລະດູແລ້ງ ແລະ ລະດູຝົນ ……………………………………… 16

ການຂົນສົ່ງ .........................................................................................18

ແມ່ຄ້າມືກາງ .......................................................................................19

ປຽບທຽບການຜະລິດ ແລະ ການຕະຫຼາດຢູ່ໃນເຂດໂຄງການ ແລະ ນອກໂຄງການ ….19

V. ສະຫລຸບ ........................................................................................... 20

VI. ຂໍ້ສະເໜີແນະ .................................................................................... 20

ເອກະສານອ້າງອີງ ...................................................................................... 22

# ຄຳຂອບໃຈ

ຜົນສຳເລັດຂອງບົດສະເໜີການຄົ້ນຄ້ວາທົດລອງສະບັບນີ້, ຂ້າພະເຈົ້າຂໍຂອບໃຈ ແລະ ຮູ້ບຸນຄຸນມາຍັງບັນດາ ທ່ານ ພະນັກງານວິຊາການຈາກສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ໂດຍສະເພາະແມ່ນພະນັກງານຈາກສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ພາກເໜືອ ທີ່ໄດ້ໃຫ້ການຮ່ວມມືໃນການລົງເກັບກຳຂໍ້ມູນຢູ່ພາກສະໜາມ. ຂໍຂອບໃຈ ທ່ານ ຄຳຫຼ້າ ພະນັກງານວິຊາການຫ້ອງການກະສິກຳ ແລະ ປ່າໄມ້ ເມືອງໂພນໃຊ ຂໍຮູ້ບຸນຄຸນມາຍັງໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ເຂດພູດອຍຮ່ວມມືລາວ-ຊູ ແອດ ທີ່ໃຫການຊ່ວຍເຫຼືອທາງດ້ານທຶນຮອນໃນການຈັດຕັ້ງປະຕິບັດການຄົ້ນຄ້ວາຄັ້ງນີ້. ພິເສດ ຂໍ ຂອບໃຈມາຍັງ ທ່ານ ຄຳໄພ ມະນີວົງ ຫົວໜ້າພະແນກ ຄຸ້ມຄອງຂໍ້ມູນຂ່າວສານ, ທ່ານ ດຣ. ລິນຄຳ ດວງສະຫວັນ ຫົວໜ້າໜ່ວຍງານຄົ້ນຄ້ວາ ເສດຖະກິດ-ສັງຄົມ, Dr. yayoi ທີ່ປຶກສາປະຈຳໜ່ວຍງານຄົ້ນຄ້ວາ ເສດຖະກິດ-ສັງຄົມ ແລະ ທ່ານ ດຣ ທິບພະວົງ ທີ່ໄດ້ໃຫ້ຄວາມຮູ້ ແລະ ຄຳ ແນະນຳໃນການຂຽນບົດຄົ້ນຄ້ວາໃຫ້ສຳເລັດຜົນດ້ວຍດີ.

# ບົດຄັດຫຍໍ້

ເປັນທີ່ຍອມຮັບແລ້ວວ່າການຜະລິດກະສິກຳເພື່ອເປັນສິນຄ້າ ແມ່ນອີກທາງເລືອກໜຶ່ງເພື່ອແກ້ໄຂບັນຫາຄວາມທຸກຈົນຂອງປະຊາຊົນໃນເຂດຊົນນະບົດແຕ່ການຜະລິດກະ ສິກຳຂອງຊາວກະສິກອນຢູ່ເມືອງໂພນໄຊ ຍັງບໍ່ມີກິດຈະກຳອັນໃດທີ່ໂດດເດັ່ນ ມີບັນຫາຂາດການຜະລິດກະສິກຳທີ່ສ້າງລາຍຮັບຕົ້ນຕໍໃຫ້ແກ່ຄອບຄົວ, ຜະລິດອອກມາແລ້ວບໍ່ມີບ່ອນຈຳໜ່າຍ, ລາຄາຕ່ຳ, ການຮັບຮູ້ຂໍ້ມູນດ້ານການຕະຫຼາດຂອງຊາວກະສິກອນຍັງໜ້ອຍ, ສະມັດຕະພາບຂອງຜະລິດຕະພັນບໍ່ສູງ, ຄຸນນະພາບຕ່ຳ, ຂາດເຕັກນິກ, ຂາດການປຸງແຕ່ງ ແລະ ການໝູນວຽນຂອງສິນຄ້າຍັງບໍ່ສະໝ່ຳສະເໝີ.

ດ້ວຍເຫດນັ້ນ, ເພື່ອຕ້ອງການຍົກລະດັບເຕັກນິກການຜະລິດກະສິກຳໃຫ້ແທດເໝາະກັບສະພາບຂອງແຕ່ລະທ້ອງຖິ່ນ ແລະ ສົ່ງເສີມການຜະລິດກະສິກຳເປັນສິນຄ້າ ມີຄວາມຈຳເປັນໄດ້ສຶກສາຄົ້ນຄວ້າ ລະອຽດກ່ຽວກັບເງື່ອນໄຂທ່າແຮງທາງດ້ານການຕະຫຼາດ, ລາຄາ, ເງື່ອນໄຂໃນການເຂົ້າເຖິງປັດໃຈນຳເຂົ້າໃນການຜະລິດ, ລະບົບຕະຫຼາດທີ່ຮອງຮັບຕໍ່ການ ເພີ້ມຂຶ້ນ ຂອງຜົນຜະລິດ ແລະ ນະໂຍບາຍທາງດ້ານການຕະຫຼາດຂອງແຕ່ລະທ້ອງຖິ່ນ.

ຈຸດປະສົງຕົ້ນຕໍຂອງການສຶກສາໃນຄັ້ງ ນີ້ແມ່ນເພື່ອສຶກສາເບິ່ງທ່າແຮງທາງດ້ານການຜະລິດຂອງກະລ່ຳປີ ແລະ ທ່າແຮງທາງດ້ານການຕະຫຼາດຂອງກະລຳປີ, ໂດຍປຽບທຽບເບິ່ງ ການຕະຫລາດຂອງກະລຳປີໃນເຂດໂຄງການ ແລະ ນອກໂຄງການ. ອີກດ້ານໜຶ່ງການສຶກສານີ້ຈະ ສຶກສາເບິ່ງຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຂອງການຕະຫລາດ ເພື່ອເປັນທາງເລືອກໃຫ້ແກ່ຊາວກະສິ ກອນຜູ້ທີ່ທຳການຜະລິດກະສິກຳ ສາມາດຮັບຮູ້ໄດ້ເຖິງການຄາດຄະເນຜົນກະທົບຕ່າງໆຂອງລະບົບ ຂໍ້ມູນຂ່າວສານທາງດ້ານການຕະຫຼາດ.

ການສຶກສານີ້ໄດ້ເກັບກຳຂໍ້ມູນທາງດ້ານປະລິມານ ແລະ ຄຸນນະພາບໂດຍຜ່ານຂໍ້ມູນມືໜຶ່ງ ແລະ ມືສອງ. ຜົນຂອງການສຶກສາແມ່ນສະທ້ອນໃຫ້ເຫັນຄວາມສຳຄັນຂອງທ່າແຮງທາງດ້ານການ ຕະຫຼາດຂອງກະລຳປີຕໍ່ລະບົບການຜະລິດ ອັນເປັນຜົນສະທ້ອນເຖິງການປັບປຸງເຕັກນິກການຜະລິດກະສິກຳແບບຍືນຍົງ, ເພື່ອກ້າວໄປສູ່ການຜະລິດເປັນສິນຄ້າເພື່ອເປັນການປັບປຸງຊີວິດການເປັນຢູ່ ແລະ ເສີມສ້າງ ລາຍຮັບຂອງຄອບຄົວຊາວກະສິກອນໃຫ້ດີເທື່ອລະກ້າວ.

**ຕາຕະລາງ**

ຕາຕະລາງ 1: ເນື້ອທີ່ການນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງເມືອງ ໂພນໄຊ ............................ 5
ຕາຕະລາງ 2: ສະຖິຕິພົນລະເມືອງ ................................................. ........................ 6
ຕາຕະລາງ 3: ສົມທຽບການຜະລິດກະລຳປີ ທີ່ປູກໃນໂຄງການ ແລະ ນອກໂຄງການ ..............10
ຕາຕະລາງ 4: ເນື້ອທີ່ທຳການຜະລິດກະລຳປີ ຢູ່ ເມືອງໂພນໄຊ ....................................... 11
ຕາຕະລາງ 5: ຜົນຜະລິດ ແລະ ເນື້ອທີ່ ຂອງ 3 ເມືອງຢູ່ແຂວງຫລວງພະບາງ ..................... 12
ຕາຕະລາງ 6: ການສົມທຽບລາຍຮັບ, ລາຍຈ່າຍ ຂອງຄອບຄົວທີ່ປູກຢູ່ໃນໂຄງການ ແລະ ນອກໂຄງການ .......................................................................... 13
ຕາຕະລາງ 7: ລາຄາສູງສຸດ ແລະ ຕ່ຳສຸດຂອງກະລ່ຳປີໃນລະດູຝົນ.............................. 17
ຕາຕະລາງ 8: ລາຄາສູງສຸດ ແລະ ຕ່ຳສຸດໃນລະດູແລ້ງ ................................................... 18

**ຮູບພາບ**


ຮູບພາບທີ 1: ແຜນທີ່ ທີ່ຕັ້ງຂອງເມືອງໂພນໄຊ ແຂວງຫລວງພະບາງ ............................ 4

ຮູບພາບທີ 2: ສວນກະລໍ່າຂອງຊາວບ້ານນ້ຳບໍ່ ເມືອງໂພນໄຊ ແຂວງຫຼວງພະບາງ .................. 8

ຮູບພາບທີ 3: ຮູບກະລໍ່າທີ່ເປັນພະຍາດ ຢູ່ບ້ານນ້ຳບໍ່ ........................................................ 9

ຮູບພາບທີ 4: ການຈຳໜ່າຍກະລຳປີຂອງຊາວກະສິກອນທີ່ຢູ່ໃນໂຄງການ ........................... 15

ຮບພາບທີ່ 5: ການຈຳໜ່າຍກະລຳປີຂອງຊາວກະສິກອນທີ່ຢູ່ນອກໂຄງການ ....................... 16

ຮູບພາບທີ 6: ຮູບສະແດງລາຄາຂອງກະລຳປີ ໃນປີ 2005 .............................................. 17

## I. ພາກສະເໜີ

### 1.1 ຄວາມເປັນມາ

ໂຄງການຄົ້ນຄວ້າ ກະສິກໍາ ແລະ ປ່າໄມ້ ເຂດພູດອຍຮ່ວມມື ລາວ-ຊູແອດ (LSUAFRP) ແມ່ນໄດ້ເຂົ້າມາດໍາເນີນການທົດລອງ ແລະ ສົ່ງເສີມທາງດ້ານການຜະລິດກະສິກໍາ ເຊິ່ງເລີ່ມແຕ່ປີ 2002 ເປັນຕົ້ນມາ. ໂຄງການດັ່ງກ່າວໄດ້ຊຸກຍູ້ປະຊາຊົນເຂດພູດອຍເຮັດການປູກຝັງ ແລະ ລ້ຽງສັດເພື່ອຍົກລະດັບຊີວິດການເປັນຢູ່ ແລະ ປັບປຸງລະບົບການຜະລິດດ້ານກະສິກໍາ ແລະ ປ່າໄມ້. ເຊິ່ງບັນດາກິດຈະກໍາຕ່າງໆເຫລົ່ານັ້ນລວມມີ: ການຜະລິດກະສິກໍາແບບປະສົມປະສານ, ການລ້ຽງແບ້ໃນທົ່ງຫຍ້າ, ການລ້ຽງປາໃນນາເຂົ້າ, ການປູກໄມ້ໃຫ້ໝາກ ແລະ ອື່ນໆ ເພື່ອກ້າວໄປສູ່ການຜະລິດເປັນສິນຄ້າ. ແຕ່ໃນຂະນະດຽວກັນປະຊາຊົນສ່ວນໃຫຍ່ຍັງມີຂໍ້ຈໍາກັດ ແລະ ຂໍ້ຫຍຸ້ງຍາກໃນການຮັບຮູ້ຂໍ້ມູນຂ່າວສານດ້ານການຕະຫລາດ, ເຕັກນິກໃໝ່ໆໃນການຜະລິດກະສິກໍາ. ດ້ວຍເຫດນັ້ນໂຄງການດັ່ງກ່າວຈຶ່ງມີບົດບາດສໍາຄັນໃນການຊີ້ ແລະ ຊອກຫາທາງອອກທີ່ດີໃນການທໍາການຜະລິດເພື່ອເປັນສິນຄ້າ ແລະ ກ້າວໄປສູ່ການແກ້ໄຂບັນຫາຄວາມທຸກຈົນຂອງຊາວກະສິກອນເຂດພູດອຍໃນອານາຄົດ.

ເມືອງໂພນໄຊ ເປັນເມືອງໜຶ່ງທີ່ຖືກຈັດຢູ່ໃນບູລິມະສິດຂອງລັດຖະບານເພື່ອແນໃສ່ຫລຸດຜ່ອນຄວາມທຸກຈົນ. ພື້ນທີ່ສ່ວນໃຫຍ່ເປັນພູດອຍ ແລະ ປະຊາຊົນໃນເຂດດັ່ງກ່າວໄດ້ຍຶດຖືເອົາການຜະລິດກະສິກໍາເປັນອາຊີບຕົ້ນຕໍ. ດັ່ງນັ້ນ ທາງລັດຖະບານຈຶ່ງໄດ້ສະໜັບສະໜູນ ພ້ອມສົ່ງເສີມທາງດ້ານວິຊາການ ແລະ ທຶນຮອນເຂົ້າໃນການຜະລິດເພື່ອຍົກສູງສະມັດຕະພາບ ພ້ອມທັງ ຄຸນນະພາບໃຫ້ສູງຂຶ້ນ, ເປັນຕົ້ນແມ່ນໄດ້ຮັບການສະໜູນດ້ານທຶນຮອນຈາກ LSUAFRP.

ສະພາບທົ່ວໄປຂອງການຕະຫລາດຢູ່ ເມືອງໂພນໄຊ ການຄ້າຂາຍຂອງປະຊາຊົນຢູ່ເຂດດັ່ງກ່າວຍັງບໍ່ທັນມີການຈັດຕັ້ງເປັນກຸ່ມ ແລະ ບໍ່ມີການຈັດສັນໃນການຈໍາໜ່າຍສິນຄ້າທີ່ເປັນລະບຽບ. ການຄ້າຂາຍຢູ່ເມືອງໂພນໄຊ ໂດຍທົ່ວໄປແລ້ວ ຈະມີແມ່ຄ້າຈາກເຂດອື່ນມາຮັບຊື້ນໍາປະຊາຊົນຢູ່ກັບບ້ານເລີຍ. ສິນຄ້າທີ່ຂາຍສ່ວນໃຫຍ່ຈະເປັນປະເພດເຄື່ອງປ່າຂອງດົງ, ພືດຜັກ ແລະ ສັດລ້ຽງ.

ຕະຫລາດຈໍາໜ່າຍສິນຄ້າຂອງປະຊາຊົນຢູ່ເຂດເມືອງ ໂພນໄຊ ແມ່ນມີຢູ່ສອງບ່ອນຄື: ຢູ່ຕະຫລາດເມືອງໂພນໄຊ ເຊິ່ງສິນຄ້າທີ່ນໍາມາຂາຍແມ່ນເຄື່ອງໃຊ້ປະຈໍາວັນຕ່າງໆ. ອີກແຫ່ງໜຶ່ງແມ່ນຕະຫລາດນັດ 10 ມື້ (10 ມື້ເປີດເທື່ອໜຶ່ງ) ເຊິ່ງຕັ້ງຢູ່ບ້ານນໍ້າບໍ່ຢູ່ໃນເຂດໂຄງການ. ສິນຄ້າທີ່ປະຊາຊົນນໍາມາຈໍາໜ່າຍຢູ່ຕະຫລາດດັ່ງກ່າວສ່ວນໃຫຍ່ແລ້ວຈະເປັນປະເພດເຄື່ອງປ່າຂອງດົງ ແລະ ສິນຄ້າກະສິກໍາທີ່ຊາວກະສິກອນປູກເອງເຊັ່ນ: ໝາກເຜັດ, ໝາກເລັ່ນ, ໝາກກ້ວຍ, ກະລໍ່າປີ, ຜັກບົ່ວ, ຜັກຫອມ

ແລະ ໝາກໄມ້. ນອກນັ້ນ ຍັງມີສິນຄ້າປະເພດເຄື່ອງໃຊ້ພາຍໃນຄອບຄົວອີກຈຳນວນຊຶ່ງແມ່ຄ້າທີ່ຂາຍສິນຄ້າປະເພດນີ້ເກືອບທັງໝົດແມ່ນມາຈາກເມືອງຫລວງພະບາງ.

## 1.2 ຈຸດປະສົງຂອງການສຶກສາ

ການສຶກສາໃນຄັ້ງນີ້ໄດ້ມີຈຸດມຸ່ງໝາຍທີ່ຈະເຮັດໃຫ້ຮັບຮູ້ ແລະ ເຂົ້າໃຈເຖິງລະບົບການຜະລິດກະລຳປີ ແລະ ການຕະຫຼາດຢູ່ເຂດເມືອງໂພນໄຊ. ພ້ອມກັນນັ້ນຍັງໄດ້ສຶກສາກ່ຽວກັບການເຂົ້າເຖິງຂໍ້ມູນທາງດ້ານການຕະຫຼາດ, ການຈັດຈຳໜ່າຍຂອງບ້ານທີ່ຢູ່ໃນ ແລະ ນອກໂຄງການນອກຈາກນັ້ນຍັງມີຈຸດປະສົງ ສະເພາະດັ່ງລຸ່ມນີ້:

- ສຶກສາທ່າແຮງທາງໃນການຜະລິດ ແລະ ການຕະຫຼາດກະລຳປີຂອງຊາວກະສິກອນໃນເຂດບ້ານເປົ້າໝາຍຂອງໂຄງການ LSUAFRP.
- ປຽບທຽບການຕະຫລາດຂອງກະລຳປີ ຂອງຊາວກະສິກອນໃນເຂດໂຄງການ ແລະ ນອກໂຄງການ.

## 1.3 ວິທີການສຶກສາ

ເພື່ອໃຫ້ບັນລຸຈຸດປະສົງດັ່ງກ່າວນັ້ນແມ່ນໄດ້ນຳໃຊ້ຂໍ້ມູນມືໜຶ່ງ (primary data) ແລະ ຂໍ້ມູນມືສອງ (secondary data). ສຳລັບການເກັບກຳ ຂໍ້ມູນມືສອງ ແມ່ນໄດ້ສຶກສາຕາມເອກກະສານທີ່ກ່ຽວຂ້ອງກັບຂ່າວສານທາງດ້ານການຕະຫລາດຂອງຜະລິດຕະພັນກະສິກຳ, ບົດລາຍງານການເຄື່ອນໄຫວວຽກງານພາກສະໜາມໂຄງການ LSUAFRP, ບົດຄົ້ນຄວ້າ ແລະ ວາລະສານຕ່າງໆ.

ສິ່ງສຳຄັນທີ່ສຸດ ໃນການເກັບກຳຂໍ້ມູນມືໜຶ່ງແມ່ນມີຄວາມຈຳເປັນ ເພື່ອເຈາະຈົ້ມເອົາຂໍ້ມູນການຜະລິດຕົວຈິງ. ຊຶ່ງໃນນີ້ ພວກເຮົາໄດ້ເກັບກຳຂໍ້ມູນໂດຍໃຊ້ແບບຟອມສຳພາດນຳບັນດາກຸ່ມຄອບຄົວເປົ້າໝາຍ ລວມທັງໃນໂຄງການ ແລະ ນອກໂຄງການ. ການສຳພາດເອົາຂໍ້ມູນດ້ານເຕັກນິກ ແລະ ທ່າແຮງຂອງການຜະລິດ ເຊັ່ນ : ກະກຽມພື້ນທີ່, ປູກ, ບົວລະບັດຮັກສາ, ເກັບກູ້, ໃຊ້ແຮງງານຕະຫລອດຮອດການລົງທຶນ, ຜົນຜະລິດ, ລາຄາຂາຍຕາມທ້ອງຕະຫລາດໃນແຕ່ລະໄລຍະ, ຄວາມອາດສາມາດໃນການຜະລິດ ແລະ ລາຍຮັບຂອງແຕ່ລະຄອບຄົວ. ພ້ອມນັ້ນ ຍັງໄດ້ສຳພາດເອົາຂໍ້ມູນສະເພາະທີ່ມີຄວາມຈຳເປັນຈາກອົງການຈັດຕັ້ງທີ່ກ່ຽວຂ້ອງອື່ນໆອີກເຊັ່ນ: ພະແນກກະສິກຳ-ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງ, ຫ້ອງການການຄ້າ ເມືອງໂພນໄຊ ແລະ ເມືອງຫລວງພະບາງ.

ນອກຈາກນັ້ນ ຍັງໄດ້ສຳພາດເອົາຂໍ້ມູນທີ່ກ່ຽວຂ້ອງກັບການຕະຫລາດຂອງກະລຳປີນຳແມ່ຄ້າຄົນກາງເຊັ່ນ : ສະຖານທີ່ເກັບຊື້, ສະຖານທີ່ຈຳໜ່າຍ, ລາຄາຊື້-ຂາຍ.

## II. ສະພາບທົ່ວໄປຂອງເຂດສຶກສາ

ບັນດາເມືອງຕ່າງໆຢູ່ທາງພາກເໜືອຂອງລາວ ແມ່ນມີຄວາມຫຍຸ້ງຍາກໃນການພັດທະນາເພາະວ່າສະພາບພື້ນທີ່ໃນການຜະລິດສ່ວນໃຫຍ່ເປັນເຂດພູສູງ, ເສັ້ນທາງເຂົ້າຫາຕົວເມືອງມີຄວາມ ລຳບາກ, ຂາດນ້ຳສະອາດ ແລະ ຂາດໂອກາດໃນການສຶກສາ. ດັ່ງນັ້ນພື້ນທີ່ສ່ວນໃຫຍ່ໃນເຂດພາກເໜືອຈຶ່ງເປັນເຂດຈຸດສຸມໃນການພັດທະນາຂອງລັດຖະບານ. ໃນນັ້ນເມືອງໂພນໄຊ ກໍ່ເປັນເມືອງໜຶ່ງທີ່ຈັດຢູ່ໃນເມືອງທີ່ທຸກຍາກ ແລະ ໄດ້ເປັນເມືອງທີ່ຢູ່ໃນບຸລິມະສິດໃນການພັດທະນາເພື່ອລຶບລ້າງຄວາມທຸກຈົນ (ກະຊວງ ກະສິກຳ ແລະ ປ່າໄມ້, 2003). ດັ່ງນັ້ນ ຈຶ່ງໄດ້ເລືອກເອົາເມືອງໂພນໄຊເປັນຕົວແທນໃນການສຶກສາຄັ້ງນີ້.

ເມືອງ ໂພນໄຊ ແມ່ນເມືອງໜຶ່ງຂອງແຂວງ ຫຼວງພະບາງທີ່ຕັ້ງຢູ່ທາງພາກເໜືອຂອງ ສປປ ລາວ ສະພາບພື້ນທີ່ພູມສັນຖານມີລັກສະນະສູງຊັນ, ມີຫ້ວຍຮ່ອມ, ແມ່ນ້ຳລຳເຊຫລາຍສາຍໄຫລຜ່ານ. ເນື້ອທີ່ທັງໝົດລວມມີ 241,104 ເຮັກຕາ ໃນນັ້ນຫລາຍກວ່າ 80 % ຂອງເນື້ອທີ່ທັງໝົດເປັນພູດອຍ. ເມືອງໂພນໄຊມີຊາຍແດນຕິດກັບຫລາຍເມືອງເຊັ່ນ: ພາກຕາເວັນອອກຕິດກັບເມືອງ ຫຼວງພະບາງ, ພາກເໜືອ ຕິດກັບເມືອງປາກແຊງ ແຂວງຫລວງພະບາງ ແລະ ເມືອງວຽງຄຳ ແຂວງຫົວພັນ, ພາກຕາເວັນຕົກຕິດກັບ ເມືອງພູກູດແຂວງ ຊຽງຂວາງ ແລະ ພາກໃຕ້ຕິດກັບ ເມືອງຊຽງເງິນ ແລະ ເມືອງພູຄູນ ແຂວງ ຫລວງພະບາງ. ເມືອງໂພນໄຊ ມີເສັ້ນທາງເຂົ້າເຖິງໄດ້ສອງລະດູ (ທາງໄປຫີນບູນ) ຈາກເສັ້ນທາງ 13 ເໜືອເຂົ້າໄປເຖິງຕົວເມືອງ ໂພນໄຊ 45 ກິໂລແມັດ ແລະ ຫ່າງໄກຈາກຕົວເມືອງຫຼວງພະບາງ 54 ກິໂລແມັດ (Land Management component, 2004).

### 2.1 ຂອບເຂດການສຶກສາ

ໃນການສຶກສາຄັ້ງນີ້ແມ່ນໄດ້ສຶກສາຢູ່ 5 ບ້ານທີ່ຢູ່ໃນເມືອງໂພນໄຊ, ຊຶ່ງນອນຢູ່ໃນໂຄງການເຂດໂຄງການ LSUAFRP ມີຈຳນວນ 3 ບ້ານ ຄື: ບ້ານຫ້ວຍມະຫາ, ບ້ານຫ້ວຍມັນ ແລະ ບ້ານນ້ຳບໍ່. ໃນເຂດດັ່ງກ່າວເປັນເຂດທີ່ມີປະຊາຊົນປູກກະລຳປີເປັນຈຳນວນຫລາຍ ເປັນຕົ້ນແມ່ນຢູ່ບ້ານນ້ຳບໍ່. ສ່ວນບ້ານທີ່ຢູ່ນອກໂຄງການຄື: ບ້ານ ປາກງາ ແລະ ບ້ານ ປາກວີ.

ຮູບພາບທີ 1: ແຜນທີ່ ທີ່ຕັ້ງຂອງເມືອງໂພນໄຊ ແຂວງຫລວງພະບາງ




*(ແຫລ່ງຂໍ້ມູນ: ສູນສຳຫລວດ ແລະ ແບ່ງເຂດດິນກະສິກຳ, 2004)*

ສາຍເຫດຂອງການເລືອກ 5 ບ້ານດັ່ງກ່າວນີ້ ເນື່ອງຈາກວ່າເກືອບ 90 % ຂອງການປູກກະລຳປີ ຢູ່ເມືອງໂພນໄຊ ແມ່ນມາຈາກ 5 ບ້ານດັ່ງກ່າວ, ເນື່ອງຈາກວ່າເຂດດັ່ງກ່າວເປັນພູພຽງ, ສາມາດຜະລິດກະລຳປີໄດ້ທັງສອງລະດູ ແລະ ມີບ່ອນຈຳໜ່າຍຢູ່ໃກ້ຕະຫລາດນ້ອຍຄື: ຕະຫລາດໂພນໄຊ ແລະ ຕະຫລາດນັດບ້ານນ້ຳບໍ່. ໃນການຄັດເລືອກກຸ່ມບ້ານທີ່ຢູ່ໃນ ແລະ ນອກໂຄງການແມ່ນເພື່ອນຳມາ ປຽບທຽບເບິ່ງຄວາມແຕກຕ່າງຂອງການຜະລິດ ແລະ ການຕະຫລາດກະລຳປີຢູ່ໃນ ຫລື ນອກໂຄງການໄດ້ຮັບຜົນຜະລິດ ຫລື ຜົນກຳໄລສູງກວ່າ, ເຮັດໃຫ້ຊາວກະສິກອນມີຄວາມໝັ້ນໃຈ, ສາມາດຕັດສິນໄດ້ວ່າການຜະລິດແບບໃດໄດ້ຮັບປະສິດທິພາບສູງກວ່າ ແລະ ຄວນເລືອກເຮັດ ແບບໃດ.

## 2.2 ເງື່ອນໄຂທາງດ້ານທຳມະຊາດ

ການຜະລິດກະສິກຳຢູ່ໃນເຂດເມືອງໂພນໄຊ ແມ່ນມີຄວາມສຳຄັນ ແລະ ຈຳເປັນ ຕໍ່ການດຳລົງຊີວິດຂອງຊາວກະສິກອນ ຍ້ອນວ່າເມືອງດັ່ງກ່າວເປັນເມືອງທີ່ນອນຢູ່ໃນເມືອງທຸກຍາກຂອງ ແຂວງຫລວງພະບາງ. ພື້ນທີ່ສ່ວນໃຫຍ່ຂອງເມືອງເກືອບ 80 % ແມ່ນເປັນເຂດພູດອຍ, ຢູ່ຫ່າງໄກຈາກຕົວເມືອງ. ການທຳມາຫາກິນສ່ວນໃຫຍ່ແມ່ນອີງໃສ່ການປູກຝັງ, ລ້ຽງສັດ ແລະ ເກັບເຄື່ອງປ່າ

ຂອງດົງຂາຍ. ພື້ນທີ່ທົ່ວເມືອງໂພນໄຊໄດ້ແຍກອອກເປັນປະເພດການນໍາໃຊ້ທີ່ດິນ ແລະ ປ່າໄມ້ ດັ່ງທີ່ສະແດງໃຫ້ເຫັນໃນຕາຕະລາງ1 ລຸ່ມນີ້ :

ຕາຕະລາງ 1: ເນື້ອທີ່ການນໍາໃຊ້ທີ່ດິນ ແລະ ປ່າໄມ້ຂອງເມືອງ ໂພນໄຊ

| ປະເພດການນໍາໃຊ້ທີ່ດິນ ແລະ ປ່າໄມ້ | ເນື້ອທີ່ (ເຮັກຕາ) | ເປີເຊັນ(%) |
|---|---|---|
| ເນື້ອທີ່ນາປີ | 173 | 0.1 |
| ເນື້ອທີ່ໄຮ່ໝູນວຽນ | 3,842 | 2 |
| ເນື້ອທີ່ປູກພືດກະສິກໍາອື່ນໆ | 2,458 | 1.24 |
| ເນື້ອທີ່ສາມາດເຮັດນາແຊງໄດ້ | 24 | 0.1 |
| ເນື້ອທີ່ປ່າໄມ້ | 117,736 | 59 |
| ເນື້ອທີ່ເສັ້ນທາງລົດ, ທາງມ້າ | 376 | 0.2 |
| ເນື້ອທີ່ທົ່ງຫຍ້າ | 3,000 | 2 |

*(ແຫຼ່ງຂໍ້ມູນ: ສູນຄົ້ນຄວ້າກະສິກໍາ ແລະ ປ່າໄມ້ພາກເໜືອ, 2005)*

ຈາກຕາຕະລາງ ທີ 1 ເຮົາຈະເຫັນເນື້ອທີ່ທັງໝົດຂອງເມືອງໂພນໄຊທີ່ປະກອບດ້ວຍເນື້ອທີ່ນາມີ 173 ເຮັກຕາ, ເນື້ອທີ່ໄຮ່ ໝູນວຽນ ແລະ ໄຮ່ຄົງທີ່ ປະມານ 3,842 ກ່ວາເຮັກຕາ ແລະ ຍັງມີເນື້ອທີປູກພືດກະສິກໍາອື່ນໆອີກ ປະມານ 2,458 ກ່ວາເຮັກຕາ. ນອກນັ້ນຍັງມີ ເນື້ອທີ່ປ່າໄມ້ ປະມານ 117,736 ກວ່າເຮັກຕາ ແລະ ນອກນັ້ນຍັງມີເນື້ອທີ່ທີ່ເປັນແມ່ນ້ຳລໍາເຊອີກປະມານ 71,000 ກ່ວາເຮັກຕາ. ເຮົາຈະເຫັນໄດ້ວ່າ ເນື້ອທີ່ປູກເຂົ້າ ແລະ ເນື້ອທີ່ປູກພືດກະສິກໍາອື່ນໆ ມີຈໍານວນໜ້ອຍບໍ່ເຖິງ 5 % ຂອງເນື້ອທີ່ທັງໝົດ.

## 2.3 ເງື່ອນໄຂທາງດ້ານເສດຖະກິດ-ສັງຄົມ

ເມືອງໂພນໄຊ ມີ 56 ບ້ານ, ປະຈຸບັນມີພົນລະເມືອງລວມທັງໝົດ 30,744 ຄົນ (ຕາຕະລາງ 2), ໃນນັ້ນ ຊົນເຜົ່າຂະມຸກວມ 63 %, ມົ້ງ 25 % ແລະ ລາວລຸ່ມ 12 % (ບົດລາຍງານໜ່ວຍງານຄົ້ນຄວ້າ ເສດຖະກິດ-ສັງຄົມ, 2004).

ຕາຕະລາງ 2: ສະຖິຕິພົນລະເມືອງ ຂອງເມືອງໂພນໄຊ

| ປີ | ພົນລະເມືອງ |
|---|---|
| 2001 | 28,259 |
| 2002 | 28,740 |
| 2003 | 29,228 |
| 2004 | 30,231 |
| 2005 | 30,231 |
| 2006 | 30,744 |

*(ແຫລ່ງຂໍ້ມູນ: ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ,2005)*

ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຂອງເມືອງໂພນໄຊ ຕົ້ນຕໍແມ່ນມາຈາກການຜະລິດກະສິກຳ ອັນເນື່ອງມາຈາກມີຫລາຍທ່າແຮງ ແລະ ຫລາຍຈຸດພິເສດທາງເງື່ອນໄຂທຳມະຊາດເຊັ່ນ: ທາງດ້ານຊັບພະຍາກອນປ່າໄມ້, ດ້ານແຫຼ່ງນ້ຳ (ມີຫ້ວຍນ້ຳຫລາຍແຫ່ງເຊັ່ນ: ຫ້ວຍນ້ຳປາ) ແລະ ສະພາບພູມອາກາດທີ່ເໝາະສົມແກ່ການຜະລິດກະສິກຳເພື່ອເປັນສິນຄ້າ ເຮັດໃຫ້ການຜະລິດກະສິກຳຂອງຊາວກະສິກອນມີແນວໂນ້ມເພີ່ມຂຶ້ນຖ້າທຽບໃສ່ປີຜ່ານມາ. ແຕ່ວ່າປະຊາຊົນຍັງພົບກັບຄວາມຫຍຸ້ງຍາກຫລາຍ ແລະ ຄອບຄົວທຸກຍາກຢູ່ໃນ ເມືອງໂພນໄຊ ຍັງມີ ຈຳນວນຫຼາຍ. ຕາມການສຳຫຼວດຄວາມທຸກຍາກປີ 2002 ມີພຽງ 5 ບ້ານທີ່ຫຼຸດພົ້ນອອກຈາກບ້ານ ທີ່ທຸກຍາກ, ມີ 10 ບ້ານທຸກຍາກປານກາງ ແລະ 41 ບ້ານ ຫລື ກວມ 73 ເປີເຊັນ ເປັນບ້ານທີ່ທຸກຍາກຫລາຍ (Land Management Component, 2004)

ອາຊີບສ່ວນໃຫຍ່ຂອງຊາວກະສິກອນແມ່ນເຮັດໄຮ່, ເຮັດນາ, ລ້ຽງສັດ ແລະ ຫາເຄື່ອງປ່າຂອງດົງ. ການຜະລິດແມ່ນຍັງອີງໃສ່ແຕ່ທຳມະຊາດ. ພ້ອມກັນນັ້ນຄວາມອຸດົມສົມບູນຂອງດິນຍັງຄ່ອນຂ້າງຕ່ຳ, ສ່ວນໃຫຍ່ແມ່ນເຂດປ່າເລົ່າອ່ອນເຊິ່ງການຜະລິດ ບໍ່ທັນໄດ້ນຳໃຊ້ເຕັກນິກອັນໃໝ່ຈຶ່ງເຮັດໃຫ້ປະສິດທິພາບຂອງ ຜົນຜະລິດຕົກຕ່ຳ.

ສະເລ່ຍທົ່ວເມືອງຍັງມີຄອບຄົວທີ່ຂາດເຂົ້າກິນປະມານ 3-4 ເດືອນ. ແຕ່ເຖິງຢ່າງໃດກໍ່ຕາມປະຊາຊົນຢູ່ເຂດດັ່ງກ່າວກໍຍັງໄດ້ຜະລິດທາດແປ້ງເພີ່ມເຕີມ ເພື່ອແກ້ໄຂການຂາດເຂົ້າກິນ ປະຊາຊົນໄດ້ປູກ ສາລີ, ເຜືອກ, ມັນ ແລະ ອື່ນໆ. ນອກນັ້ນຍັງມີບາງຄອບຄົວໄດ້ເອົາໃຈໃສ່ໃນການຜະລິດເພື່ອເປັນ ສິນຄ້າ ສິ່ງອອກອີກຫລາຍປະເພດ ສຳລັບພືດໄລຍະສັ້ນທີ່ປະຊາຊົນນິຍົມປູກມີ:

ໝາກເດືອຍ, ໝາກງາ, ໝາກນັດ, ໝາກແໜ່ງ ນອກນັ້ນຊາວກະສິກອນບາງຄອບຄົວກໍ່ໄດ້ປູກໄມ້ສັກ ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວໃນອະນາຄົດ.

## III. ລະບົບການຜະລິດກະລໍາປີ

### 3.1 ການຜະລິດ

ການຜະລິດກະລໍາປີຂອງຊາວກະສິກອນໃນເຂດເມືອງໂພນໄຊ ສ່ວນໃຫຍ່ແມ່ນຜະລິດກັນຕາມທໍາມະຊາດຕາມແບບທີ່ເຄີຍປູກຜ່ານມາ ແລະ ມີບາງຄອບຄົວທີ່ໂຄງການ (LSAUAFRP) ໄດ້ສົ່ງເສີມໃຫ້ນໍາໃຊ້ເຕັກນິກໃໝ່, ນັກວິຊາການກໍ່ໄດ້ລົງແນະນໍາໃຫ້ກັບຊາວກະສິກອນເຊັ່ນ: ການນໍາໃຊ້ຝຸ່ນຊີວະພາບ ແລະ ແນວພັນທີ່ໄດ້ມາດຕະຖານ, ວິທີການປ້ອງກັນພະຍາດແມງໄມ້, ແລະ ການບົວລະບັດຮັກສາ.

ກະລໍາປີເປັນພືດທີ່ປູກງ່າຍ ແລະ ສາມາດປູກໄດ້ໃນດິນຫຼາຍຊະນິດ ແຕ່ວ່າດິນທີ່ເໝາະສົມທີ່ສຸດແມ່ນ ດິນຊາຍແກມຕົມ (Sandy loam). ຊາວກະສິກອນປູກກະລໍາປີ 2-3 ເທື່ອຕໍ່ປີ ເຊິ່ງປູກໄດ້ 2 ລະດູຄື: ລະດູແລ້ງ ແລະ ລະດູຝົນ. ສ່ວນໃຫຍ່ແລ້ວຊາວກະສິກອນປູກກະລໍາປີໃສ່ເຂດພື້ນທີ່ໆ ມີຄວາມຮາບພຽງ ຫລື ມີຄວາມຄ້ອຍຊັນຕໍ່າຢູ່ຕາມແຄມແມ່ນໍ້າ ແລະ ແຄມຫ້ວຍ.

### 3.2 ລະດູການ ແລະ ເຕັກນິກການຜະລິດ

ການຜະລິດກະລໍາປີໃນລະດູຝົນແມ່ນເລີ່ມແຕ່ເດືອນ ມິຖຸນາ ຫາທ້າຍເດືອນ ກັນຍາ ແລະ ລະດູແລ້ງແມ່ນເລີ້ມແຕ່ເດືອນ ຕຸລາ ຫາ ພຶດສະພາ ເຊິ່ງໃນລະດູແລ້ງນີ້ສາມາດປູກກະລໍາປີໄດ້ສອງເທື່ອ.

ເຕັກນິກ ແລະ ວິທີໃນການຜະລິດກະລໍາປີນອກລະດູ, ເປັນເຕັກນິກໜຶ່ງທີ່ປະຊາຊົນເຮົາສາມາດເຮັດໄດ້ໂດຍງ່າຍເພາະມັນບໍ່ແຕກຕ່າງຍັງຫລາຍກັບການປູກກະລໍາປີໃນລະດູແລ້ງ. ສ່ວນການປູກກະລໍາປີໃນລະດູແລ້ງແມ່ນອີງໃສ່ທໍາມະຊາດ ແລະ ເຕັກນິກແບບເກົ່າ. ກະລໍາປີສາມາດປູກໄດ້ ໃນດິນເກືອບທຸກໆຊະນິດ ແຕ່ດິນທີ່ເໝາະສົມແມ່ນດິນຊາຍແກມຕົມ, ລະບາຍນໍ້າໄດ້ດີ ແລະ ເຂດໃດທີ່ເຄີຍຖືກນໍ້າຖ້ວມມາກ່ອນ. ແຕ່ເຂດທີ່ເໝາະສົມທີ່ສຸດໃນການປູກກະລໍາປີ ແມ່ນເຂດທີ່ມີອາກາດໜາວ ດັ່ງນັ້ນເຂດພາກເໜືອຂອງລາວຈຶ່ງມີເງື່ອນໄຂເໝາະສົມໃນການປູກກະລໍາປີ.

ຂັ້ນຕອນທຳອິດໃນການປູກກະລຳປີແມ່ນຕ້ອງເລີ່ມຈາກການເຮັດໜານກ້າເບ້ຍກ່ອນ. ຂະໜາດຂອງໜານກ້າແມ່ນມີຄວາມກ້ວາງປະມານ 1 ແມັດ ແລະ ລວງຍາວແມ່ນອີງຕາມເງື່ອນໄຂຂອງພື້ນທີ່. ການເຮັດໜານກ້າໃນລະດູຝົນນັ້ນແມ່ນຕ້ອງເຮັດໜານສູງປະມານ 40-50 ຊັງຕີແມັດ ເພື່ອບໍ່ໃຫ້ນ້ຳຖ້ວມ. ສ່ວນລະດູແລ້ງແມ່ນເຮັດໜານຕ່ຳກໍ່ໄດ້ ແລະ ຄວນປະສົມຝຸ່ນຄອກແຫ້ງໃສ່ກ່ອນ ການກ້າເບ້ຍປະມານ 10-20 ກິໂລ ຕໍ່ 10 ຕາແມັດ.

ຮູບທີ 2: ສວນກະລ່ຳຂອງຊາວບ້ານນ້ຳບໍ່ ເມື່ອງໂພນໄຊ ແຂວງຫຼວງພະບາງ



*(ແຫລ່ງຂໍ້ມູນ: ເກັບກຳຕົວຈິງພາກສະໜາມ ເມສາ, 2006)*

ໃນການຫວ່ານແນວພັນເຮົາຄວນໃສ່ປູນຂາວຮອງພື້ນໜານກ່ອນ ແລະ ກໍ່ເຮັດຕາໜ່າງປ້ອງກັນເພື່ອບໍ່ໃຫ້ຝົນຕົກໃສ. ຫລັງຈາກນັ້ນເອົາແນວພັນທີ່ກຽມໄວ້ມາຫວ່ານ, ຫົດນ້ຳ, ເອົາແກບມາປົກໃສ່ ຫຼືວ່າເອົາເຟືອງແຫ້ງກໍ່ໄດ້ ແລະ ກໍ່ຫົດນ້ຳອີກເທື່ອໜຶ່ງ. ແຕ່ໃນນັ້ນຕ້ອງໄດ້ຫົດນ້ຳໜານກ້າມື້ລະເທື່ອໃນຕອນເຊົ້າ ຫລື ຕອນແລງກໍ່ໄດ້.

ຫຼັງຈາກກ້າເບ້ຍກະລຳປີໄດ້ 30 ວັນ, ຕ້ອງໄດ້ກະກຽມພື້ນທີ່ເພື່ອປູກ, ເຊິ່ງໃນການກຽມດິນແມ່ນປະຕິບັດດັ່ງນີ້: ໄຖດິນໃຫ້ເລິກປະມານ 20-25 ຊັງຕີແມັດ ໂດຍໃຊ້ແຮງງານຄວາຍ ຫຼື ລົດໄຖນາ. ຕາມປົກກະຕິແລ້ວໃຫ້ຕາກແດດໄວ້ປະມານ 2-3 ວັນແລ້ວຄາດໃຫ້ລະອຽດ (ມີບາງຄອບຄົວບໍ່ໄດ້ໄຖໂດຍໃຊ້ການ ຂຸດຂຸມເອົາເລີຍ). ຫລັງຈາກນັ້ນກໍ່ຂຸດຂຸມເພື່ອປູກ ເຊິ່ງຂຸມຈະຫ່າງກັນປະມານ 15-25 ຊັງຕີແມັດ.

ໃນການທົດນ້ຳກະລຳປີ ອາທິດໜຶ່ງທົດ 1-2 ເທື່ອໃນລະດູແລ້ງ. ສ່ວນລະດູຝົນແມ່ນທົດໜຶ່ງເທື່ອ ການເສຍຫ້ຍາແມ່ນ 7 ມື້ເສຍຫ້ຍາ 1 ເທື່ອ. ຄວນເສຍຫຍ້າ ແລະ ພວນດິນໄປພ້ອມກັນ. ເມື່ອຕົ້ນກະລຳປີມີໃບໃຫຍ່ ແລະ ປົກຄຸມດິນແລ້ວບໍ່ຈຳເປັນຕ້ອງເສຍຫຍ້າອີກ. ການໃສ່ຝຸ່ນແມ່ນໃສ່ທັງຝຸ່ນຄອກ ແລະ ຝຸ່ນເຄມີ. ອັດຕາການໃສ່ຝຸ່ນແມ່ນໃສ່ສອງຄັ້ງຕໍ່ 1 ລະດູການຄື: ໃສ່ຮອງພື້ນກ່ອນປູກໂດຍຫວ່ານໃຫ້ທົ່ວບໍລິເວນພື້ນທີ່ປູກໃນອັດຕາ 0.3 ຫາ 0.5 ກິໂລຕໍ່ຕາແມັດ ແລະ ຫລັງຈາກ ປູກໄດ້ 30 ວັນແລ້ວໃຫ້ພວນດິນຫ່າງຈາກຕົ້ນປະມານ 5-10 ຊັງຕີແມັດ, ໂດຍໃສ່ຝຸ່ນໃນອັດຕາ 50-80 ກຼາມ/ຕົ້ນ.

ພະຍາດທີ່ມັກລະບາດກັບກະລຳປີມີພະຍາດເບ້ຍເປື່ອຍ ແລະ ພະຍາດຫົວເນົ່າ. ນອກນັ້ນຍັງມີບັນຫາບົ້ງເຈາະຫົວກະລຳ. ວິທີປ້ອງກັນພະຍາດເບ້ຍເປື່ອຍ ແມ່ນໃຊ້ປູນຂາວຫວ່ານໃສ່ໃຫ້ທົ່ວໜານກ້າເພື່ອຂ້າເຊື້ອໂລກ ຫຼື ອີກກໍລະນີໜຶ່ງ ຫຼັງຈາກຝົນຕົກເຊົາແລ້ວໃຫ້ຊາວກະສິກອນ ເອົານ້ຳທຳມະດາທົດນ້ຳຝົນອອກ. ພ້ອມທັງເປີດຕາໜ່າງຄຸມໜານກ້າອອກ. ສ່ວນວິທີປ້ອງກັນພະຍາດຫົວເນົ່າ ເມື່ອເວລາພົບເຫັນກະລຳຕົ້ນໃດທີ່ຫົວເນົ່າຊາວກະສິກອນຕ້ອງໄດ້ຕັດຕົ້ນນັ້ນ ຖິ້ມເລີຍເພື່ອບໍ່ໃຫ້ຕົ້ນທີ່ເປັນພະຍາດຂະຫຍາຍໄປຫາຕົ້ນອື່ນ. ສຳລັບວິທີປ້ອງກັນບົ້ງເຈາະຫົວ ຊາວກະສິກອນໄດ້ໃຊ້ຢາສະໝູນໄພຈາກຕົ້ນຂົມກະເດົາສີດໃສ່ທຸກໆ 7 ວັນ.

ຮູບທີ 3: ຮູບກະລຳທີ່ເປັນພະຍາດຢູ່ບ້ານນ້ຳບໍ່



*(ແຫລ່ງຂໍ້ມູນ: ເກັບກຳຕົວຈິງພາກສະໜາມ ເມສາ, 2006)*

ຈາກຮູບທີ 3 ເຮົາຈະເຫັນວ່າກະລ່ຳຂອງຊາວກະສິກອນທີ່ປູກຢູ່ເຂດເມືອງໂພນໄຊຍັງມີພະຍາດ ແລະ ແມງໄມ້ທຳລາຍເຊັ່ນ: ພະຍາດເບ້ຍເປື່ອຍ, ຫົວເນົ່າ ແລະ ບົ້ງເຈາະຫົວກະລ່ຳ, ເຮັດໃຫ້ນ້ຳໜັກ, ຄຸນນະພາບ, ປະລິມານ ແລະ ລາຄາຫຼຸດລົງ.

ຕາຕະລາງ3: ສົມທຽບການຜະລິດກະລຳປີທີ່ ປູກໃນໂຄງການ ແລະ ນອກໂຄງການ

| ການປູກກະລຳປີໃນເຂດໂຄງການ (LSAUAFRP) | | ການປູກກະລຳປີຢູ່ເຂດນອກໂຄງການ | |
|---|---|---|---|
| ລະດູແລ້ງ | ລະດູຝົນ | ລະດູແລ້ງ | ລະດູຝົນ |
| - ໜານກ້າເບ້ຍກະລຳຈະບໍ່ສູງ<br>- ຫວ່ານປູນຂາວຮອງພື້ນ<br>- ເສຍຫຍ້າ2 ຄັ້ງຕໍ່ອາທິດ<br>- ເວລາທົດນ້ຳແມ່ນ 2-3 ເທື່ອຕໍ່ອາທິດ<br>- ມັກມີບົ້ງມາເຈາະເວລາກະລຳປີເປັນຫົວ | - ໜານກ້າເບ້ຍຈະສູງປະມານ 40-50 ຊັງຕີແມັດ<br>- ຫວ່ານປູນຂາວຮອງ ພື້ນ<br>- ເອົາຕາໜ່າງມາມຸງເພື່ອປ້ອງກັນໃນເວລາຝົນຕົກ<br>- ເສຍຫຍ້າໜຶ່ງຄັ້ງຕໍ່ອາທິດ<br>-ທົດນ້ຳໜຶ່ງ ຄັ້ງຕໍ່ອາທິດ<br>- ພະຍາດເບ້ຍເປື່ອຍ, ພະຍາດຫົວເນົ່າແລະບົ້ງເຈາະຫົວກະລຳປີ | - ໜານກ້າເບ້ຍ ກະລຳຈະບໍ່ສູງ<br>- ເສຍຫຍ້າ 2 ອາທິດຕໍ່ລະດູ<br>- ເວລາທົດນ້ຳແມ່ນ 2-3 ເທື່ອຕໍ່ ອາທິດ<br>- ມັກມີບົ້ງມາເຈາະເວລາກະລຳເປັນຫົວ | - ໜານກ້າເບ້ຍຈະສູງປະມານ 40-50 ຊັງຕີແມັດ<br>- ເສຍຫຍ້າ ໜຶ່ງ ຄັ້ງຕໍ່ອາທິດ<br>- ທົດນ້ຳໜຶ່ງຄັ້ງຕໍ່ອາທິດ<br>-ພະຍາດເບ້ຍເປື່ອຍ, ພະຍາດຫົວເນົ່າ ແລະ ບົ້ງເຈາະຫົວກະລຳປີ |

***(ແຫລ່ງຂໍ້ມູນ: ເກັບກຳຕົວຈິງພາກສະໜາມ ເມສາ, 2006)***

ຈາກຕາຕະລາງທີ 3 ເຮົາຈະເຫັນໄດ້ເຖິງການປຽບທຽບວິທີການປູກ ແລະ ການບົວລະບັດຮັກສາຂອງຊາວກະສິກອນທີ່ຢູ່ໃນໂຄງການ ແລະ ນອກໂຄງການ. ແມ່ນມີບາງຂັ້ນຕອນທີ່ຄືກັນເຊັ່ນ: ຄວາມສູງຂອງໜານກ້າ, ການໃຫ້ນ້ຳ ແລະ ບົວລະບັດຮັກສາ ຂັ້ນຕອນທີ່ແຕກຕ່າງກັນແມ່ນ ການຫວ່ານປູນຂາວຮອງພື້ນໜານ ກ່ອນປູກ ແລະ ການໃຊ້ຕາໜ່າງກັນຝົນ.

## 3.3 ເນື້ອທີ່ຂອງການຜະລິດ

(ຈາກຕາຕະລາງທີ່ 4) ກ່ອນໜ້າທີ່ໂຄງການເຂົ້າມາສົ່ງເສີມ ສ່ວນໃຫຍ່ແລ້ວຊາວກະສິກອນປູກສຳລັບບໍລິໂພກພາຍໃນຄອບຄົວເທົ່ານັ້ນ. ຫລັງຈາກທີ່ໂຄງການໃຫ້ທຶນໃນການຜະລິດຊາວກະສິກອນໄດ້ປູກ ຫລາຍຂຶ້ນໂດຍສະເພາະແມ່ນ ບ້ານນ້ຳບໍ່ ເປັນບ້ານທີ່ປູກກະລຳປີເປັນສິນຄ້າ ແລະ ປູກຈຳນວນ ຫຼາຍກວ່າໝູ່ຄື: ຈາກປີ 2002 ປູກ 2 ເຮັກຕາ. ໃນປີ 2003 ເພີ່ມຂຶ້ນເປັນ 4.5 ເຮັກຕາ ແລະ ປີ 2004 ຊາວກະສິກອນປູກ 5.2 ເຮັກຕາ. ແຕ່ວ່າປີ 2005 ຊາວກະສິກອນພັດປູກຫລຸດລົງ 4,8 ເຮັກຕາ ເນື່ອງຈາກວ່າໃນປີ 2004 ນ້ຳຖ້ວມພື້ນທີ່ທຳການຜະລິດຂອງຊາວກະສິກອນ ມີເຖິງ 60 ເປີເຊັນ ທີ່ບໍ່ໄດ້ເກັບກູ້ຜົນຜະລິດຈຶ່ງເຮັດໃຫ້ຊາວກະສິກອນປູກໜ້ອຍລົງໃນປີຕໍ່ມາ (ໃນປີ 2006 ຊາວກະສິກອນທີ່ປູກກະລຳປີເຫຼືອພຽງ 11 ຄອບຄົວ, ຢູ່ບ້ານທ້ວຍມັນ ແລະ ບ້ານທ້ວຍມະຫາ ກໍເຊັ່ນດຽວກັນ ເຊິ່ງໃນປະຈຸບັນ ສອງບ້ານນີ້ເຫຼືອພຽງບ້ານລະໜຶ່ງຄອບຄົວເທົ່ານັ້ນ).

ສ່ວນໃຫຍ່ຊາວກະສິກອນຈະປູກກະລ່ຳຢູ່ຕາມແຄມແມ່ນ້ຳ ແລະ ເຂດໃກ້ບ້ານເທົ່ານັ້ນເພື່ອສະດວກໃນການບົວລະບັດຮັກສາ. ໃນເມືອງໂພນໄຊ ຊາວກະສິກອນມັກປູກໃນລະດູແລ້ງ ຊຶ່ງມີ ເຖິງ 42 ຄອບຄົວທີ່ປູກ ແລະ ມີພຽງ 8 ຄອບຄົວທີ່ປູກກະລຳນອກລະດູ (ລະດູຝົນ). ຄອບຄົວທີ່ປູກກະລຳປີນອກລະດູໃນບ້ານນ້ຳບໍ່ແມ່ນເຄີຍເຂົ້າຮ່ວມໂຄງການມາແລ້ວ 3 ປີ. ຊາວກະສິກອນ ທີ່ບໍ່ປູກຍ້ອນຜົນຜະລິດໄດ້ໜ້ອຍກ່ວາໃນລະດູແລ້ງ ເພາະວ່າໃນລະດູຝົນມັກຖືກໄພທຳມະຊາດທຳລາຍ, ເກີດໄພນ້ຳຖ້ວມ, ການບົວລະບັດຮັກສາແມ່ນຫຍຸ້ງຍາກ, ແນວພັນທີ່ນຳມາປູກກໍ່ມີລາຄາສູງກ່ວາ ແລະ ເນື້ອທີ່ກໍ່ມີຈຳນວນ ຈຳກັດເພາະວ່າຊາວກະສິກອນນຳໃຊ້ເພື່ອປູກເຂົ້າ.

ຕາຕະລາງ 4: ເນື້ອທີ່ທຳການຜະລິດກະລຳປີຢູ່ ເມືອງໂພນໄຊ (ເຮັກຕາ)

| ປີ | ບ້ານທີ່ຢູ່ໃນໂຄງການ | | | ບ້ານທີ່ຢູ່ນອກໂຄງການ | |
|---|---|---|---|---|---|
| | ນ້ຳບໍ່ | ທ້ວຍມັນ | ທ້ວຍມະຫາ | ປາກວີ | ປາກງາ |
| 2002 | 2 | 0 | 0.5 | 0 | 0.5 |
| 2003 | 4.5 | 1 | 1 | 0 | 1 |
| 2004 | 5.2 | 1.5 | 0.2 | 0 | 3 |
| 2005 | 4.8 | 0.6 | 0.2 | 1.6 | 2.5 |

*(ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ເມືອງໂພນໄຊ, 2005)*

ສຳລັບການປູກກະລຳປີຢູ່ສອງບ້ານທີ່ຢູ່ນອກໂຄງການຄື: ບ້ານບ້ານປາກວີ ຊາວກະສິກອນຫາກໍ່ເລີ່ມປູກໄດ້ 2-3 ປີ ຜ່ານມາ. ສ່ວນໃຫຍ່ແລ້ວເກືອບແມ່ນແຕ່ຊົນເຜົ່າລາວສູງທີ່ປູກ ໂດຍສະເພາະແມ່ນບ້ານປາກວີ ຊຶ່ງຈຸດປະສົງຂອງການປູກແມ່ນເພື່ອບໍລິໂພກພາຍໃນຄອບຄົວເທົ່ານັ້ນ. ສ່ວນບ້ານປາກງາຊາວກະສິກອນປູກໄດ້ຫຼາຍປີແລ້ວ ແຕ່ປູກໃນຈຳນວນໜ້ອຍເນື່ອງຈາກວ່າຂາດແຮງງານ ແລະ ເນື້ອທີ່ທຳການຜະລິດ.

ຜົນຜະລິດ ແລະ ເນື້ີທີ່ປູກກະລຳປີຂອງຊາວກະສິກອນຢູ່ເມືອງ ໂພນໄຊ ແມ່ນມີຈຳນວນໜ້ອຍ ຖ້າທຽບໃສ່ເມືອງ ອື່ນຂອງແຂວງ ຫຼວງພະບາງ (ເບິ່ງໃນຕາຕະລາງທີ 5) ຢູ່ເມືອງ ຫລວງພະບາງ ໃນປີ 2004 ມີເນື້ອທີ່ທຳການຜະລິດປະມານ 5 ເຮັກຕາ ໄດ້ຮັບຜົນຜະລິດ 58 ໂຕນ, ໃນປີ 2005 ເນື້ອທີ່ທຳການຜະລິດເພີ້ມຂຶ້ນ 1 ເຮັກຕາ, ແຕ່ຜົນຜະລິດພັດຫລຸດລົງ 4 ໂຕນ, ຍ້ອນໄພນ້ຳຖ້ວມ ແລະ ອີກສ່ວນໜຶ່ງເປັນພະຍາດຕາຍ. ເມືອງທີ່ມີການຜະລິດກະລຳປີຫຼາຍຢູ່ ແຂວງ ຫຼວງພະບາງແມ່ນ ເມືອງຊຽງເງິນຄື: ປີ 2004 ເນື້ອທີ່ປູກ 62 ເຮັກຕາ, ໄດ້ຮັບຜົນຜະລິດ 1,240 ໂຕນ. ປີ 2005 ເນື້ອທີ່ປູກ 55 ເຮັກຕາ ຫລຸດລົງ 7 ເຮັກຕາ ແລະ ຜົນຜະລິດ 825 ໂຕນ. ສ່ວນເມືອງຫຼວງພະບາງ ເນື້ອທີ່ທຳການຜະລິດ ໃນປີ 2004 ມີ 35 ເຮັກຕາ, ຜົນຜະລິດໄດ້ 385 ໂຕນ ແລະ ປີ 2005 ເນື້ອທີ່ປູກເພີ້ມຂຶ້ນເປັນ 40 ເຮັກຕາ.

ຕາຕະລາງ 5: ຜົນຜະລິດ ແລະ ເນື້ອທີ່ ໃນການຜະລິດກະລ່ຳປີຂອງ 3 ເມືອງຢູ່ແຂວງຫລວງພະບາງ

| ເມືອງ | 2004 | | **2005** | |
|---|---|---|---|---|
| | ເນື້ອທີ່ (ເຮັກຕາ) | ຜົນຜະລິດ (ໂຕນ) | ເນື້ອທີ່ (ເຮັກຕາ) | (ຜົນຜະລິດ (ໂຕນ) |
| ເມືອງຫລວງພະບາງ | 35 | 385 | 40 | 480 |
| ເມືອງໂພນໄຊ | 5 | 58 | 6 | 54 |
| ເມືອງຊຽງເງິນ | 62 | 1,240 | 55 | 825 |
| ລວມ | 102 | 1,443 | 101 | 1,359 |

*(ແຫ່ລ່ງຂໍ້ມູນ: ພະແນກກະສິກຳ ແລະ ປ່າໄມ້ແຂວງຫລວງພະບາງ ,2005)*

### 3.4 ແຮງງານໃນການຜະລິດ

ອີງຕາມການສຳພາດຄອບຄົວຢູ່ເຂດຂອງກໍລະນີສຶກສາ. ແຮງງານທີ່ໃຊ້ໃນການຜະລິດແມ່ນມີ 3 ພາກສ່ວນຄື: ແຮງງານຄອບຄົວ, ແຮງງານຄ່າຈ້າງ ແລະ ແຮງງານແລກປ່ຽນ. ຢູ່ໃນເຂດດັ່ງກ່າວ

ການນຳໃຊ້ເຄື່ອງຈັກທີ່ທັນສະໄໝເຂົ້າໃນການຜະລິດຍັງບໍ່ທັນມີຫຼາຍ, ຍ້ອນແນວນັ້ນຈຶ່ງມີຄວາມຈຳເປັນທີ່ຕ້ອງໄດ້ໃຊ້ແຮງງານຄົນ ແລະ ແຮງງານສັດເປັນຫຼັກ. ສະນັ້ນມາຮອດປະຈຸບັນທາງອຳນາດການປົກຄອງບ້ານກໍ່ຄືອຳນາດການປົກຄອງເມືອງ ໂດຍປະສານສົມທົບກັບ ໂຄງການຕ່າງໆໄດ້ຈັດຝຶກອົບຮົມໃຫ້ແກ່ຊາວກະສິກອນທາງດ້ານການຜະລິດໂດຍສ້າງໃຫ້ເຂົາເຈົ້າມີຄວາມຮູ້ ແລະ ເຕັກນິກໃນການຜະລິດເພື່ອໃຫ້ກາຍເປັນແຮງງານທີ່ມີຄຸນນະພາບ ແລະ ເພື່ອເຮັດໃຫ້ໄດ້ຮັບຜົນຜະລິດສູງຂຶ້ນເລື້ອຍໆ.

ໂດຍທົ່ວໄປແລ້ວ ແຮງງານໃນການຜະລິດຢູ່ເຂດດັ່ງກ່າວສ່ວນໃຫຍ່ເປັນແຮງງານຕາມລະດູການ ຈະເຮັດສະເພາະຊ່ວງລະດູການຜະລິດເທົ່ານັ້ນ. ເນື່ອງຈາກວ່າເມື່ອບໍ່ໄດ້ທຳການຜະລິດເຂົາເຈົ້າ ກໍ່ໄປປະກອບ ອາຊີບອື່ນເພື່ອຫາລາຍໄດ້ເພີ່ມແກ່ຄອບຄົວ ແລະ ສ່ວນຫຼາຍກໍ່ແມ່ນແຮງງານເພດຍິງ, ຄ່າຈ້າງແຮງງານໃນເຂດເມືອງໂພນໄຊ ປະມານ 10,000 ກີບ/ມື້.

## 3.5 ຕົ້ນທຶນ ແລະ ລາຍຮັບ

ການຜະລິດແມ່ນຈຳເປັນຕ້ອງໃຊ້ຕົ້ນທຶນເພື່ອນຳໃຊ້ເຂົ້າໃນການຜະລິດ ແລະ ເພື່ອໝູນໃຊ້ເຂົ້າໃນແຕ່ລະລະດູການຜະລິດເປັນຕົ້ນແມ່ນ: ຊື້ແນວພັນ, ຄ່າແຮງງານກະກຽມພື້ນທີ່, ປຸ໋ຍ, ຢາປາບສັດຕູພືດ ແລະ ອື່ນໆ (ຕາຕະລາງ 6) ໂດຍແຫຼ່ງທຶນທີ່ໄດ້ມານັ້ນສ່ວນໃຫຍ່ແມ່ນມາຈາກທຶນຕົນເອງ, ທຶນກູ້ຢືມຈາກໂຄງການ ແລະ ຍາດຕິພີ່ນ້ອງ.

ຕາຕະລາງ6: ການສົມທຽບລາຍຮັບ,ລາຍຈ່າຍຂອງຄອບຄົວທີ່ປູກຢູ່ໃນໂຄງການ ແລະ ນອກໂຄງ ການ.

| ກິດຈະກຳ | ລາຍຈ່າຍ ແລະ ລາຍຮັບຂອງ ຊາວກະສິກອນ ທີ່ຢູ່ໃນໂຄງການ (ກີບ/ປີ) | ລາຍຈ່າຍ ແລະ ລາຍຮັບຂອງ ຊາວກະສິກອນ ທີ່ຢູ່ນອກໂຄງການ (ກີບ/ປີ) |
|---|---|---|
| ແນວພັນ | 120,000 | 51,000 |
| ປຸຍ, ຢາປາບສັດຕູພືດ | 150,000 | 28,000 |
| ໄຖ ແລະ ຄາດ | 56,800 | 21,000 |
| ຄ່າແຮງງານ (ຂຸດ, ປູກ) | 100,000 | 0 |
| ຕົ້ນທຶນທັງໝົດໃນການຜະລິດ | 426,800 | 100,000 |
| ລາຍຮັບທັງໝົດ | 4,281,000 | 1,456,000 |
| ***ລາຍຮັບສຸດທິ*** | **3,854,200** | **1,356,000** |

***(ແຫລ່ງຂໍ້ມູນ : ຈາກການສຳຫລວດຕົວຈິງ, 2006)***

ຈາກຕາຕະລາງທີ່ 6 ເຮົາເຫັນໄດ້ວ່າຕົ້ນທຶນທີ່ໃຊ້ໃນການຜະລິດກະສິກຳແມ່ນບໍ່ສູງປານໃດຖ້າທຽບໃສ່ລາຍຮັບ. ຕົ້ນທຶນທີ່ໃຊ້ໃນການຊື້ແນວພັນ, ປຸ໋ຍ ແລະ ຢາປາບສັດຕູພືດຢູ່ໃນໂຄງການ ສະເລ່ຍຈະສູງກ່ວາຢູ່ນອກໂຄງການ. ແນວພັນທີ່ຊາວກະສິກອນໃຊ້ປູກຢູ່ໃນເຂດໂຄງການສ່ວນໃຫຍ່ແລ້ວຈະແມ່ນແນວພັນຂອງໄທເຊິ່ງມີລາຄາສູງກ່ວາແນວພັນຂອງຈີນ. ແຕ່ວ່າຄຸນນະພາບ ດີກວ່າແນວພັນຂອງຈີນທີ່ຊາວກະສິກອນຢູ່ເຂດນອກໂຄງການມັກໃຊ້. ໃນການຈ້າງແຮງງານຂຸດຂຸມ ແລະ ປູກຢູ່ໃນໂຄງການຄ່າໃຊ້ຈ່າຍຈະສູງກວ່າ. ເນື່ອງຈາກວ່າ ເມື່ອຊາວກະຊິກອນປູກຫຼາຍ ແຮງງານບໍ່ພຽງພໍຈຶ່ງໄດ້ຈ້າງແຮງງານຂ້າງນອກຕື່ມ, ຊຶ່ງຄ່າຈ້າງແຮງງານໃນການຂຸດຂຸມ ແລະ ປູກ ແມ່ນປະມານ 10,000-15,000 ກີບຕໍ່ມື້. ສ່ວນຄ່າຈ້າງໄຖນາ ແລະ ຄາດປະມານ 100,000 ຕໍ່ໄລ່. ການຂົນສົ່ງຂອງຊາວກະສິກອນຢູ່ນອກໂຄງການເກືອບ 100% ແມ່ນບໍ່ໄດ້ເສຍຄ່າໃຊ້ຈ່າຍໃນການຂົນສົ່ງ. ສ່ວນໃນໂຄງການຄ່າຂົນສົ່ງສິນຄ້າເພື່ອນຳໄປຈຳໜ່າຍຢູ່ຕະຫລາດພູສີ, ຄ່າໃຊ້ຈ່າຍໃນການຂົນສົ່ງຖ້ຽວໜຶ່ງປະມານ 10,000 ກີບ ສະເລ່ຍຄ່າໃຊ້ຈ່າຍຕໍ່ປີປະມານ 30,000 ກີບ. ສ່ວນໃຫຍ່ແລ້ວຊາວກະຊິກອນຈະບໍ່ໄດ້ໄປຂາຍເອງ ມີແມ່ຄ້າຄົນກາງມາຮັບຊື້ ຈຶ່ງເຮັດໃຫ້ຕົ້ນທຶນໃນການຂົນສົ່ງຕໍ່າ.

ຊາວກະສິກອນທີ່ຢູ່ໃນໂຄງການແມ່ນໄດ້ຮັບກຳໄລສູງກວ່າ ຄອບຄົວຂອງຊາວກະສິກອນທີ່ຢູ່ ນອກໂຄງການເຖິງວ່າຕົ້ນທຶນທີ່ໃຊ້ຈະສູງກວ່າ, ເນື່ອງຈາກວ່າຊາວກະສິກອນທີ່ຢູ່ໃນໂຄງການຈະມີທ່າແຮງດີກວ່າໂດຍສະເພາະແມ່ນທາງດ້ານການຜະລິດ ແລະ ການຕະຫລາດ. ເຂດດັ່ງກ່າວ ແມ່ນໃກ້ຕົວເມືອງ ຫລວງພະບາງ ເມື່ອຜະລິດແລ້ວສາມາດນຳໄປຂາຍຢູ່ຕົວເມືອງໄດ້ ແລະ ກໍ່ມີຊາວກະສິກອນບາງຄອບຄົວ ທີ່ເຄີຍເຂົ້າຮ່ວມໂຄງການມາກ່ອນແລ້ວຊຶ່ງເຂົາເຈົ້າຮູ້ເຕັກນິກໃນການປູກ ແລະ ວິທີການບົວລະບົດຮັກສາ.

## IV. ສະພາບທົ່ວໄປຂອງການຕະຫລາດຢູ່ເມືອງໂພນໄຊ

ສິນຄ້າທີ່ຊາວກະສິກອນໃນເຂດດັ່ງກ່າວນຳໄປຈຳໜ່າຍສ່ວນໃຫ່ຍຈະແມ່ນ ເຄື່ອງປ່າຂອງດົງເຊັ່ນ: ແຂມ, ບໍສາ, ເປືອກເມືອກ ແລະ ອື່ນໆ. ສ່ວນສິນຄ້າທີ່ຊາວກະສິກອນຜະລິດຂາຍກໍ່ມີ: ເຂົ້າ, ສາລີ , ໝາກເລັ່ນ, ກະລໍ່າ, ໄມ້ໃຫ້ໝາກ ແລະໄມ້ອຸດສາຫະກຳ. ສັດລ້ຽງມີຄື: ງົວ, ຄວາຍ, ໝູ, ປາ, ເປັດ ແລະ ໄກ່. ການຂາຍກະລຳປີຂອງຊາວກະສິກອນໃນເຂດໂຄງການ ແມ່ນມີທັງຂາຍຍົກ ແລະ ຂາຍຍ່ອຍອີງຕາມສະຖານະການ.

### 4.1 ຂະບວນການທາງດ້ານການຕະຫຼາດທີ່ຢູ່ໃນເຂດຂອງໂຄງການ ແລະ ນອກໂຄງການ.

ການຈຳໜ່າຍກະລຳປີຂອງຊາວກະສິກອນສ່ວນໃຫຍ່ແລ້ວ ແມ່ນຂາຍຢູ່ກັບສວນໂດຍມີພໍ່ຄ້າມາຊື້ ແລະ ອີກຈຳນວນໜຶ່ງແມ່ນຊາວກະສິກອນເອົາໄປຂາຍເອງຢູ່ພາຍໃນເມືອງໂພນໄຊ, ຕະຫລາດເມືອງໂພນໄຊ ແລະ ຕະຫລາດພູສີ.

ສະເພາະກະລຳປີຢູ່ບ້ານປາກວີຊາວກະສິກອນສ່ວນໃຫຍ່ແມ່ນປູກເພື່ອບໍລິໂພກ. ສ່ວນຢູ່ບ້ານປາກງາແມ່ນປູກເພື່ອເປັນສິນຄ້າ ແລະ ຢູ່ເຂດດັ່ງກ່າວຈະປູກສະເພາະລະດູແລ້ງເທົ່ານັ້ນ. ເນື່ອງຈາກວ່າໃນລະດູຝົນຊາວກະສິກອນສ່ວນໃຫຍ່ຈະປູກເຂົ້າໃສ່ພື້ນທີ່ປູກກະລຳປີ, ສ່ວນຢູ່ບ້ານນ້ຳບໍ່, ບ້ານຫ້ວຍມັນ, ບ້ານຫ້ວຍມະຫາແມ່ນຜະລິດເພື່ອເປັນສິນຄ້າ ແລະ ໄດ້ສະໜອງໃຫ້ແກ່ລູກຄ້າຢູ່ຕະຫລາດເມືອງຫລວງພະບາງ ແລະ ຕະຫລາດນັດ10 ມື້ ບ້ານນ້ຳບໍ່.

#### 4.1.1 ການຕະຫຼາດຂອງກະລຳປີທີ່ຢູ່ໃນເຂດຂອງໂຄງການ

ບ່ອນຈຳໜ່າຍກະລຳຂອງຊາວກະສິກອນຢູ່ ບ້ານນ້ຳບໍ່, ບ້ານຫ້ວຍມະຫາ, ບ້ານຫ້ວຍມັນ ສ່ວນໃຫຍ່ແລ້ວແມ່ນຂາຍຢູ່ສວນເລີຍ ໂດຍມີພໍ່ຄ້າຄົນກາງມາຮັບຊື້. ເນື່ອງຈາກວ່າການຂາຍຢູ່ສວນຈະສະດວກສະບາຍກວ່າເອົາໄປຂາຍເອງເຖິງວ່າລາຄາຈະຖືກກ່ວາກໍ່ຕາມ ແລະ ອີກສ່ວນໜຶ່ງແມ່ນຂາຍຢູ່ຕະຫລາດນັດ 10 ມື້ຂອງບ້ານນ້ຳບໍ່ເພາະວ່າຢູ່ໃກ້. ມີບາງຄອບຄົວໄດ້ນຳໄປຂາຍ ຢູ່ຕະຫລາດພູສີເມືອງຫລວງພະບາງ.

ຮູບທີ 4: ຮູບສະແດງການພົວພັນການຕະຫລາດທີ່ຂາຍຢູ່ໃນເຂດໂຄງການ



### 4.1.2 ການຕະຫລາດຂອງກະລຳປີທີ່ຢູ່ນອກໂຄງການ

ການຕະຫລາດກະລຳປີຢູ່ສອງບ້ານທີ່ຢູ່ເຂດນອກໂຄງການ ທີ່ຢູ່ໃນເຂດເທດສະບານ ເມືອງໂພນໄຊ, ບ້ານປາກງາມີຈຳນວນ 7-8 ຄອບຄົວທີ່ມີການປູກກະລຳປີຫລາຍ ແລະ ປູກເພື່ອເປັນສິນຄ້າ. ການຈຳໜ່າຍສ່ວນໃຫ່ຍແລ້ວແມ່ນຂາຍຢູ່ແຕ່ໃນເມືອງໂພນໄຊເທົ່ານັ້ນເຊັ່ນ: ຂາຍຢູ່ຕະຫລາດ ເມືອງໂພນໄຊ, ຂາຍຢູ່ເຮືອນ ແລະ ມີພໍ່ຄ້າມີກາງມາຮັບຊື້ແລ້ວນຳໄປຂາຍຕໍ່ ຫລື ເອົາໄປແລກປ່ຽນກັບສິນຄ້າປະເພດອື່ນໆເຊັ່ນ: ເຂົ້າ ແລະ ປະເພດເຄື່ອງປ່າຂອງດົງນຳປະຊາຊົນ ທີ່ຢູ່ພາຍໃນເມືອງໂພນໄຊ ແລະ ເມືອງທີ່ຢູ່ໃກ້ຄຽງດັ່ງທີ່ສະແດງໃນ ຮູບທີ 5.

ຮູບທີ: 5 ການຈຳໜ່າຍກະລຳປີຂອງຊາວກະສິກອນທີ່ຢູ່ນອກເຂດໂຄງການ




### 4.2 ລາຄາຂອງກະລຳປີໃນລະດູແລ້ງ ແລະ ລະດູຝົນ

ໂດຍທົ່ວໄປແລ້ວລາຄາກະລຳປີທີ່ຂາຍແມ່ນມີຄວາມແຕກຕ່າງກັນຕາມລະດູການຄື: ໃນລະດູຝົນ ລາຄາ ຈະສູງກວ່າລະດູແລ້ງ ແຕ່ວ່າປະລິມານໜ້ອຍກ່ວາ ແລະ ຊາວກະສິກອນຂາຍເອງແມ່ນໄດ້ລາຄາສູງກວ່າລາຄາທີ່ແມ່ຄ້າມາຮັບຊື້. ສຳລັບລາຄາທີ່ຈຳໜ່າຍຕາມຫ້ອງຕະຫລາດ ແມ່ນຢູ່ຕະຫລາດພູສີໄດ້ລາຄາສູງສຸດ, ຮອງລົງມາແມ່ນຕະຫລາດເມືອງໂພນໄຊ ແລະ ລາຄາຕ່ຳທີ່ສຸດ ແມ່ນແມ່ຄ້າຄົນກາງມາຮັບຊື້.

ຮູບທີ 6 ຮູບສະແດງລາຄາຂອງກະລຳປີ ໃນປີ 2005




*(ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງ ເມສາ, 2006)*

### 4.2.1 ລາຄາກະລຳປີໃນຊ່ວງລະດູຝົນ

ຈາກຮູບສະແດງທີ 6 ເຫັນວ່າ ລາຄາຂອງກະລຳປີທີ່ຂາຍຢູ່ໃນຊ່ວງເດືອນ ມິຖຸນາຫາ ເດືອນກັນຍາ ລາຄາທີ່ຊາວກະສິກອນຂາຍຈະສູງກ່ວາໃນລະດູແລ້ງ ແຕ່ວ່າ ສ່ວນຫລາຍຈະບໍ່ນິຍົມປູກ ເນື່ອງຈາກວ່າຂັ້ນຕອນໃນການຜະລິດ ແລະ ການບົວລະບັດຮັກສາຫຍຸ້ງຍາກ ໂດຍສະເພາະພື້ນທີ່ປູກສ່ວນໃຫຍ່ກໍ່ຖືກນ້ຳຖ້ວມ. ລາຄາທີ່ອອກຈາກສວນໄປຫາຕະຫລາດພູສີປະມານ 7,000-7,500 ກີບ/ກິໂລ, ກະລຳປີທີ່ອອກຈາກສວນໄປຂາຍຢູ່ຕະຫລາດນັດ 10 ມື້ຢູ່ບ້ານນ້ຳບໍ່ປະມານ 2,500-5,500 ກີບ/ກິໂລ. ຕະຫລາດ ເມືອງໂພນໄຊ 2,500-4,000 ກີບ/ກິໂລ ແລະ ຂາຍຢູ່ກັບສວນທີ່ມີພໍ່ຄ້າມີກາງມາຮັບຊື້ ເອງລາຄາຈະຖືກກ່ວາປະມານ 2,000-3,000 ກີບ/ກິໂລ. (ຈາກຕາຕະລາງທີ 7)

ຕາຕະລາງທີ 7: ລາຄາສູງສຸດ ແລະ ຕ່ຳສຸດຂອງກະລຳປີໃນຊວງລະດູຝົນ (ກີບ/ກິໂລ)

| ບ່ອນຈຳໜ່າຍ | ລາຄາຕ່ຳສຸດ | ລາຄາສູງສຸດ |
|---|---|---|
| ຕະຫຼາດພູສີ | 4,000 | 7,500 |
| ຕະຫຼາດນັດບ້ານນ້ຳບໍ່ | 2,500 | 5,500 |
| ຂາຍໃຫ້ພໍ່ຄ້າຢູ່ສວນ | 2,000 | 3,000 |
| ຂາຍເອງຢູ່ກັບບ້ານ | 2,500 | 3,500 |
| ຕະຫລາດເມືອງໂພນໄຊ | 2,500 | 4,000 |

*(ແຫລ່ງຂໍ້ມູນ: ຈາກການສຳຫລວດຕົວຈິງ ເມສາ, 2006)*

### 4.2.2 ລາຄາຂອງກະລໍ່າປີໃນລະດູແລ້ງ

ປະຊາຊົນນິຍົມປູກຫລາຍໃນຊ່ວງລະດູແລ້ງ, ໃນຊ່ວງນີ້ຊາວກະສິກອນເກືອບ 95 ເປີເຊັນ ແມ່ນບໍ່ໄດ້ເຮັດນາ ຂັ້ນຕອນໃນການຜະລິດ ແລະ ການບົວລະບັດຮັກສາກໍ່ງ່າຍ, ຕົ້ນທຶນໃນການຜະລິດກໍ່ຕໍ່າ, ຜົນຜະລິດກໍ່ໄດ້ຫລາຍເນື່ອງຈາກວ່າບໍ່ມີນໍ້າຖ້ວມ. ດັ່ງນັ້ນ ລາຄາຂອງກະລໍາປີຈຶ່ງຕໍ່າກວ່າໃນລະດູຝົນ ຂາຍໃຫ້ພໍ່ຄ້າມີກາງມາຊື້ເອງຢູ່ສ່ວນ ແລະ ຂາຍຢູ່ຕະຫລາດນັດ ບ້ານນໍ້າບໍ່ລາຄາຈະຢູ່ປະມານ 1,000-2,000 ກີບຕໍ່ກິໂລ. ລາຄາທີ່ຂາຍຢູ່ຕະຫລາດເມືອງໂພນໄຊ 500-2,500 ກີບຕໍ່ກິໂລ, ສ່ວນຂາຍຢູ່ຕະຫລາດພູສີປະມານ 1,000-3,500 ກີບຕໍ່ກິໂລ. (ຕາຕະລາງທີ 8)

ຕາຕະລາງທີ 8: ລາຄາສູງສຸດ ແລະ ຕໍ່າສຸດຂອງກະລໍາປີທີ່ຂາຍໃນລະດູແລ້ງ

| ບ່ອນຈໍາໜ່າຍ | ລາຄາຕໍ່າສຸດ | ລາຄາສູງສຸດ |
|---|---|---|
| ຕະຫຼາດພູສີ | 1,000 | 3,500 |
| ຕະຫຼາດນັດບ້ານນໍ້າບໍ່ | 1,000 | 2,500 |
| ຂາຍໃຫ້ພໍ່ຄ້າຢູ່ສວນ | 500 | 1,500 |
| ຂາຍເອງຢູ່ກັບບ້ານ | 500 | 2,000 |
| ຕະຫລາດເມືອງໂພນໄຊ | 500 | 2,500 |

*ແຫລ່ງຂໍ້ມູນ: ຈາກການສໍາຫລວດຕົວຈິງ ເມສາ, 2006*

### 4.3 ການຂົນສົ່ງ

ໃນປະຈຸບັນໄດ້ມີເສັ້ນທາງຄົມມະນາຄົມ ລະຫວ່າງ ເມືອງໂພນໄຊ ຫາເມືອງຫລວງພະບາງແລ້ວເຮັດໃຫ້ຊາວກະສິກອນສາມາດຂົນສົ່ງສິນຄ້າ ເພື່ອເອົາໄປຈໍາໜ່າຍຢູ່ຕະຫລາດໃນເມືອງໄດ້ຢ່າງ ສະດວກສະບາຍ ແລະ ໄປມາໄດ້ທັງສອງລະດູ, ເຊິ່ງມີຄວາມຍາວປະມານ 62 ກິໂລແມັດ. ແຕ່ເຂດໂຄງການ ຫາ ເມືອງຫລວງພະບາງປະມານ 53 ກິໂລແມັດ. ການຂົນສົ່ງກະລໍາປີຂອງຊາວກະສິກອນເຂດດັ່ງກ່າວເພື່ອເອົາໄປຂາຍຢູ່ຕະຫລາດພູສີເກືອບ 100 % ແມ່ນຈ້າງລົດໂດຍສານ. ຄ່າຂົນສົ່ງແມ່ນອີງຕາມ ຈໍານວນຂອງກະລໍາປີ ແຕ່ສ່ວນໃຫຍ່ແລ້ວແມ່ນຄິດໄລ່ເປັນຖົງວຄື 1 ຖົງວ (ໄປກັບ) 10,000 ກີບຕໍ່ກະລໍາ 3-4 ເປົາຂາວ (ເປົາໜຶ່ງປະມານ 25-30 ກິໂລ). ແຕ່ວາມີພຽງ 8 ຄອບຄົວທີ່ໄດ້ນໍາ ເອົາກະລໍາປີໄປຂາຍຢູ່ຕະຫລາດພູສີ ຍ້ອນວ່າມີພໍ່ຄ້າມີກາງມາຮັບຊື້ຢູ່ ກັບສວນເລີຍ.

## 4.4 ແມ່ຄ້າມືກາງ

ແມ່ຄ້າມືກາງທີ່ຮັບຊື້ກະລຳປີຂອງຊາວກະສິກອນຢູ່ໃນເຂດໂຄງການຄື: ບ້ານນ້ຳບໍ່, ບ້ານຫ້ວຍມັນ ແລະ ບ້ານຫ້ວຍມະຫາ. ສ່ວນໃຫຍ່ແລ້ວແມ່ນມາຈາກບ້ານຜາວຽງ ແລະ ບ້ານ ໄຮ່ຫຼວງ ເມືອງຫລວງພະບາງ, ເຊິ່ງໄດ້ຮັບຊື້ແລ້ວເອົາໄປຂາຍຕໍ່ຢູ່ຕະຫລາດພູສີ ແລະ ຕະຫລາດອື່ນໆໃນເມືອງຫລວງພະບາງ, ການຮັບຊື້ສ່ວນໃຫຍ່ແລ້ວຈະມາເອົາຢູ່ສວນເລີຍ.

ຈາກຮູບທີ 5 ເຮົາເຫັນໄດ້ວ່າພໍ່ຄ້າມື້ກາງທີ່ຮັບຊື້ນຳຊາວກະສິກອນນັ້ນ ລາຄາຄ່ອນຂ້າງ ຈະຕ່ຳກ່ວາທີ່ຊາວກະກອນເອົາໄປຂາຍເອງເກືອບເຄິ່ງໜຶ່ງ (50 %) ຄື: ໃນລະດູແລ້ງລະຫວ່າງເດືອນ ພະຈິກ ຫາ ເດືອນທັນວາປີ 2005 ລາຄາທີ່ແມ່ຄ້າຮັບຊື້ແມ່ນ 1,000 ກີບ/ກິໂລ. ແຕ່ໃນຊ່ວງເວລາດຽວກັນນັ້ນແມ່ຄ້າເອົາໄປຂາຍເອງຢູ່ຕະຫຼາດພູສີແມ່ນ 4,000 ກີບ/ກິໂລ. ໃນເດືອນມັງກອນ ຫາ ເດືອນເມສາ ລາຄາປະມານ 500 ກີບ/ກິໂລ ແຕ່ແມ່ຄ້າເອົາໄປຂາຍປະມານ 1,500-2,000 ກີບ/ກິໂລ.

## 4.5 ປຽບທຽບການຜະລິດ ແລະ ການຕະຫຼາດຢູ່ໃນເຂດໂຄງການ ແລະ ນອກໂຄງການ

ການປູກກະລຳປີຂອງຊາວກະສິກອນຢູ່ເມືອງ ໂພນໄຊ ແມ່ນປູກແບບກະແຈກກະຈາຍ. ການຜະລິດໃນບາງເຂດກໍ່ຜະລິດເພື່ອບໍລິໂພກ ແລະ ບາງຄອບຄົວກໍ່ແບ່ງໄວ້ຂາຍ. ຢູ່ບ້ານປາກວິເກືອບ 50 % ທີ່ໄດ້ຜະລິດເພື່ອບໍລິໂພກ. ລາຍໄດ້ສະເລ່ຍຈາກການຂາຍກະລຳປີຂອງຄອບຄົວຊາວກະສິກອນ 11 ຄອບຄົວ ແມ່ນປະມານ 200,000-250,000 ກີບຕໍ່ປີ. ສ່ວນຢູ່ບ້ານ ປາກງາ ມີ 12 ຄອບຄົວທີ່ປູກກະລຳປີເປັນສິນຄ້າ ນອກນັ້ນແມ່ນປູກຈຳນວນໜ້ອຍເພື່ອບໍລິໂພກເທົ່ານັ້ນ. ສ່ວນໃຫຍ່ແລ້ວຊາວບ້ານປາກງາ ຈະປູກພຽງລະດູດຽວ, ມີພຽງຄອບຄົວດຽວເທົ່ານັ້ນທີ່ປູກສອງລະດູ.

ສ່ວນບ້ານທີ່ຢູ່ໃນໂຄງການ LSUAFRP ກໍ່ຄື: ບ້ານຫ້ວຍມະຫາ ມີ 25 ຄອບຄົວທີ່ປູກກະລ່ຳປີເກືອບ 90 % ແມ່ນປູກເພື່ອເປັນສິນຄ້າ (ລວມທັງຜູ້ທີ່ເຂົ້າຮ່ວມ ແລະ ບໍ່ໄດ້ເຂົ້າຮ່ວມໂຄງການ) ແລະ ປູກທັງສອງລະດູມີ 12 ຄອບຄົວທີ່ລາຍໄດ້ຫລັກຂອງຄອບຄົວມາຈາກການຂາຍກະລຳປີ. ແຕ່ວ່າໃນປະຈຸບັນ ປະລິມານການປູກກະລຳປີຂອງຊາວກະສິກອນ ແມ່ນຫລຸດລົງຈາກປີຜ່ານມາ ເພາະວ່າຜົນຜະລິດຈະຕ່ຳກວ່າປີຜ່ານມາຍ້ອນເກີດໄພນ້ຳຖ້ວມ ເຮັດໃຫ້ບາງຄອບຄົວບໍ່ໄດ້ຮັບຜົນຜະລິດເລີຍ. ດັ່ງນັ້ນ ຈຶ່ງເປັນສາຍເຫດເຮັດໃຫ້ຊາວກະສິກອນປູກໜ້ອຍລົງ.

## V. ສະຫລຸບ

ຈາກການສຶກສາຄົ້ນຄວ້າການຕະຫລາດກະລຳປີຂອງຊາວກະສິກອນຢູ່ເມືອງໂພນໄຊ ເຫັນໄດ້ວ່າທ່າແຮງອັນພົ້ນເດັ່ນໃນການປູກກະລຳປີຂອງຊາວກະສິກອນ ແມ່ນ : ມີພື້ນທີ່ທຳການຜະລິດ ແລະສະພາບແວດລ້ອມທີ່ແທດເໝາະ, ຕົ້ນທຶນໃນການຜະລິດກໍ່ຕ່ຳ, ສາມາດປູກ, ບົວລະບັດຮັກສາໄດ້ງ່າຍ, ຂາຍໄດ້ລາຄາດີ, ມີເວລາເຫຼືອເພື່ອເຮັດກິດຈະການອື່ນໆອີກ. ການຜະລິດກະລຳປີຂອງຊາວກະສິກອນສຳລັບບ້ານທີ່ຢູ່ໃນໂຄງການ LSUAFRP ແມ່ນໄດ້ເລີ່ມກ່ອນທີ່ໂຄງການຈະເຂົ້າມາ, ແຕ່ປູກໃນຈຳນວນໜ້ອຍ ຊຶ່ງປູກເພື່ອການບໍລິໂພກ ແລະ ຂາຍຈຳນວນ ໜຶ່ງເທົ່ານັ້ນ. ນັບແຕ່ປີ 2002 ເປັນຕົ້ນມາທາງໂຄງການ LSUAFRP ໄດ້ນຳເອົາວິຊາການເຂົ້າມາຊ່ວຍເພື່ອແນະນຳທາງດ້ານເຕັກນິກເຊັ່ນ : ການຄັດເລືອກແນວພັນ, ການກະກຽມພື້ນທີ່, ການກ້າເບ້ຍ, ການບົ່ງເບ້ຍ, ການໃສ່ຝຸ່ນ, ວິທີການບົວລະບັດຮັກສາ ແລະ ປ້ອງກັນພະຍາດແມງໄມ້. ນອກນັ້ນທາງໂຄງການຍັງໄດ້ໃຫ້ການຊ່ວຍເຫລືອທາງດ້ານ ທຶນຮອນໃນການຜະລິດອີກຈຳນວນໜຶ່ງ. ສະຖິຕິການປູກກະລຳປີ ໃນປີ 2005 ສຳລັບ ໃນເຂດໂຄງການແມ່ນບ້ານນ້ຳບໍ່ເປັນບ້ານທີ່ປູກຫລາຍກວ່າໝູ່ ຊຶ່ງປູກໃນເນື້ອທີ່ 4.8 ເຮັກຕາ ຫຼຸດລົງຈາກ 5.2 ເຮັກຕາ ໃນປີ 2004 ເນື່ອງຈາກເກີດໄພນ້ຳຖ້ວມ. ສ່ວນເຂດນອກໂຄງການແມ່ນບ້ານປາກງາປູກຫລາຍກວ່າເຊັ່ນ: 2.5 ເຮັກຕາ ໃນປີ 2005 ຊຶ່ງຂະບວນການຜະລິດແມ່ນຍັງອີງໃສ່ແຕ່ທຳມະຊາດ ຫຼື ແບບດັ່ງເດີມ, ຂາດເຕັກນິກອັນໃໝ່ ແລະ ຜະລິດມາດົນແລ້ວ.

ລະບົບການຕະຫລາດຂອງຊາວກະສິກອນທີ່ຢູ່ໃນເຂດໂຄງການ LSUAFRP ຍັງບໍ່ທັນມີການຈັດຕັ້ງທີ່ເປັນລະບົບ, ບໍ່ມີການຈັດຕັ້ງເປັນກຸ່ມ ແລະ ການຂາຍກໍ່ຍັງກະແຈກກະຈາຍ. ສ່ວນຫລາຍກະລຳປີທີ່ຜະລິດໄດ້ກໍ່ ຂາຍຢູ່ສວນເລີຍ ໂດຍມີພໍ່ຄ້າຄົນກາງມາຮັບຊື້. ເນື່ອງຈາກວ່າ ການຂາຍຢູ່ສ່ວນຈະສະດວກສະບາຍກວ່າເອົາໄປຂາຍເອງ ເຖິງວ່າລາຄາຈະຖືກກ່ວາກໍ່ຕາມ. ອີກສ່ວນໜຶ່ງແມ່ນຂາຍຢູ່ຕະຫລາດນັດ 10 ມື້ຂອງບ້ານນ້ຳບໍ່ເພາະວ່າຢູ່ໃກ້ ແລະ ມີບາງຄອບຄົວໄດ້ນຳໄປຂາຍຢູ່ຕະຫລາດພູສີ ເມືອງຫລວງພະບາງ. ນອກນັ້ນ ການໝູນວຽນສິນຄ້າກໍ່ບໍ່ສະໝ່ຳສະເໝີ, ເມື່ອມີແມ່ຄ້າມາຮັບຊື້ ຈຶ່ງເຮັດໃຫ້ແມ່ຄ້າສາມາດກົດລາຄາ ເຮັດລາຄາຂອງກະລຳປີຕົກຕ່ຳກວ່າລາຄາຂອງກະລຳປີທີ່ຢູ່ໃນ ເຂດອື່ນໆຂອງ ແຂວງ ຫລວງພະບາງ. ແຕ່ສຳລັບຊາວກະສິກອນທີ່ຢູ່ນອກໂຄງການແມ່ນຈຳໜ່າຍຢູ່ແຕ່ໃນເມືອງໂພນໄຊເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມການຜະລິດກະລຳປີແມ່ນ ໄດ້ເປັນອາຊີບທີ່ສຳຄັນ ອັນໜຶ່ງທີ່ສາມາດສ້າງແຫຼ່ງລາຍຮັບເພີ່ມໃຫ້ແກ່ບັນດາ ຄອບຄົວຊາວກະສິກອນ. ພ້ອມນັ້ນກະລຳປີຍັງເປັນອາຫານທີ່ມີລົດຊາດດີປະເພດໜຶ່ງ ທີ່ປະຊາຊົນນິຍົມກັນບໍລິໂພກຊຶ່ງສາມາດຜະລິດໄດ້ພາຍໃນທ້ອງຖິ່ນຂອງຕົນ. ສະນັ້ນຈຶ່ງເຫັນໄດ້ວ່າການຜະລິດ ກະລຳປີຈຶ່ງເປັນທາງ

ເລືອກອັນໜຶ່ງທີ່ແທດເໝາະແກ່ການຫຼຸດຜ່ອນ ແລະ ແກ້ໄຂຄວາມທຸກຈົນຂອງຊາວກະສິກອນໃນເຂດພູດອຍ.

## VI. ຂໍ້ສະເໜີແນະ

ໃນນາມວິຊາການ ແລະ ຜ່ານການວິເຄາະບັນຫາທີ່ກ່າວມາຂ້າງເທິງພວກເຮົາສາມາດສັງລວມຂໍ້ສະ ເໜີແນະໄດ້ດັ່ງລຸ່ມນີ້:

- ເນື່ອງຈາກວ່າເນື້ອທີ່ທຳການຜະລິດຂອງຊາວກະສິກອນຍັງມີຈຳກັດ, ບາງຄອບຄົວຍັງໄດ້ ໄປປູກໃສ່ຕາມທົ່ງນາຈຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການປ້ອງກັນສັດທຳລາຍໃນທຸກໆລະດູ. ສະນັ້ນ ພາກສ່ວນທີ່ກ່ຽວຂ້ອງໂດຍສະພາະແມ່ນພະນັກງານ ກະສິກຳ - ປ່າໄມ້ເມືອງ ຕະຫຼອດຮອດອຳນາດ ການປົກຄອງຂັ້ນຕ່າງໆທີ່ກ່ຽວຂ້ອງ ຄວນມີການຈັດສັນພື້ນທີ່ໆເໝາະສົມເພີ່ມໃຫ້ເຂົາເຈົ້າ.
- ນັກວິຊາການຄວນແນະນຳໃຫ້ຊາວກະສິກອນປູກພືດປະສົມປະສານກັບພືດຕະກຸນຖົ່ວ ສະຫຼັບກັບກະລຳປີໃນຊ່ວງທີ່ບໍ່ໄດ້ປູກກະລຳປີ ໂດຍສະເພາະແມ່ນໃນລະດູຝົນ. ເນື່ອງຈາກວ່າ ພືດຕະກຸນຖົ່ວມີຄຸນສົມບັດໃນການປັບປຸງດິນ ຊຶ່ງສາມາດເພີ່ມຄວາມອຸດົມສົມບູນໃນດິນເພື່ອຊ່ວຍປັບປຸງຜົນຜະລິດກະລຳປີໃຫ້ສູງຂຶ້ນ.
- ສະມາຄົມພັດທະນາບ້ານ ຫຼື ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຄວນມີການຕິດຕາມຂໍ້ມູນທາງດ້ານການຕະຫລາດ ແລະ ຕິດແທດກັບພໍ່ຄ້າທີ່ມາເກັບຊື້ເພື່ອຮັບປະກັນການເໜັງຕີງຂອງລາຄາ ແລະ ການຮອງຮັບປະລິມານສິນຄ້າ ລະຫວ່າງ ແມ່ຄ້າມີກາງກັບ ຊາວກະສິກອນຢ່າງລະອຽດບໍ່ໃຫ້ມີຝ່າຍໃດເສຍປຽບກັນ.
- ຕໍ່ກັບບັນຫາໄພນ້ຳຖ້ວມເຮັດໃຫ້ສວນກະລຳປີເສຍຫາຍບາງປີກໍ່ບໍ່ໄດ້ຮັບຜົນລະປູກເລີຍ. ສະນັ້ນ ທາງຫ້ອງການ ກະສິກຳ - ປ່າໄມ້ເມືອງ ຫຼື ອຳນາດການປົກຄອງຂັ້ນຕ່າງໆທີ່ກ່ຽວຂ້ອງຄວນຈັດສັນພື້ນທີ່ແຫ່ງໃໝ່ທີ່ເຫັນວ່າມີຄວາມເໝາະສົມ ແລະ ປອດໄພຈາກໄພນ້ຳຖ້ວມ.
- ນັກວິຊາການທີ່ກ່ຽວຂ້ອງຄວນມີການສ້າງແຜນ ແລະ ນຳພາຕົວແທນຂອງຊາວກະສິກອນ ໄປທັດສະນະສຶກສາເຂດທີ່ມີການຜະລິດກະລຳປີດ້ວຍທຶນຮອນຂອງຕົນເອງ ໃນເຂດອື່ນໆ ທີ່ເຫັນວ່າຜົນຜະລິດງາມ ແລະ ມີສະມັດຕະພາບສູງກວ່າເພື່ອເປັນການສົ່ງເສີມໃຫ້ຊາວກະສິກອນມີຈິດສຳນຶກໃນຄວາມເປັນຕົວຂອງຕົນເອງ ແລະ ມີຄວາມກະຕືລືລົ້ນທີ່ຈະພັດທະນາການຜະລິດຂອງຕົນໃຫ້ໄດ້ຮັບຜົນຜະລິດສູງຂຶ້ນເລື້ອຍໆ.

# ເອກະສານອ້າງອີງ


ກະຊວງກະສິກຳ ແລະ ປ່າໄມ້,2003

ກອງມີ ສີມຸກດາ ແລະ ພອນສະນິດ ຜິນນະຈິດ(2005)ບົດລາຍງາຍກຳລະນີສຶກສາ Nafrec: Luangphabang

ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້. (2005). ບົດລາຍງານຄວາມຄືບໜ້າຂອງໂຄງ ການ Sida, NAFRI. Vientiane.

ທຸມເພັງ ພະພິນໄຊ, (2005). Workshop on Market Information System for Agriculture and Forestry Products-summary report. NAFRI: Vientiane.

National Poverty Eradication Programme (2003), Eigth Round Table Meetiing: Vientiane,

Land management Component.(2004). Agro-ecosystems analysis of phonsay district. Nafri: Vientiane

Socio-Economic Unit. (2003). Field Report on Indigenous Soil Taxonomy, Nafri: Vientiane

Socio-Economic Unit. (2004). Marketing and Household Level Diagnostic Survey in Phonxay District. Nafri-LSUAFRP: Vientiane

Socio-Economic Unit. (2004). Report on Household Diagnostic Survey. Nafri: Vientiane